# ແຜນຈັດປະສົບການ

# ໜ່ວຍຄອບຄົວຂອງຂ້ອຍ

## ຊັ້ນອະນຸບານສຶກສາປີທີ 1



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2012

ແຜນຈັດປະສົບການ ໜ່ວຍຄອບຄົວຂອງຂ້ອຍ ຊັ້ນອະນຸບານສຶກສາປີທີ 1 2012

ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການ UNICEF ປະຈຳລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ (ບ້ວງນ້ຳເທີນ 2)
ທະບຽນພິມເລກທີ: ...............
ຂະໜາດ 21x29,7 ຊມ ຈຳນວນ..............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2012

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ

2421

ເລກທີ່.../ສສກ.ສວສ/2012

ນະຄອນຫຼວງວຽງຈັນ, ວັນທີ:............... 16 Jul 2012

# ຂໍ້ຕົກລົງຂອງລັດຖະມົນຕີ

## ວ່າດ້ວຍການຮັບຮອງ ແລະ ປະກາດນຳໃຊ້ຫຼັກສູດ ແລະ ປຶ້ມປະກອບການຮຽນ-ການສອນ ສຳລັບຊັ້ນອະນຸບານສຶກສາ ປີທີ 1

ເຫັນຕາມ: ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 7 ກັນຍາ 2011;

ເຫັນຕາມ: ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ສະບັບເລກທີ 1124/ ສສກ.ຈຕ, ລົງວັນທີ 20 ເມສາ 2012.

ເຫັນຕາມ: ການສະເໜີຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ລັດຖະມົນຕີວ່າການກະຊວງສຶກທິການ ແລະ ກິລາ ຈຶ່ງຕົກລົງ

ມາດຕາ 1: ຮັບຮອງ ແລະ ປະກາດນຳໃຊ້ຫຼັກສູດ ແລະ ປຶ້ມປະກອບການຮຽນ-ການສອນ ສຳລັບຊັ້ນອະນຸບານສຶກສາ ປີທີ 1 ສະບັບປະຕິຮູບ ໃນໂຮງຮຽນອະນຸບານ ທົ່ວປະເທດ ນັບແຕ່ ສົກຮຽນ 2012-2013 ເປັນຕົ້ນໄປ.

ມາດຕາ 2: ໃຫ້ກົມອະນຸບານປະຖົມສຶກສາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ກົມຄຸ້ມຄອງການສຶກສາພາກເອກະຊົນ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມໜ້າທີ່ຂອງໃຜລາວໃຫ້ໄດ້ຮັບຜົນດີ.

ມາດຕາ 3: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ດຣ.ພັນຄຳ ວິພາວັນ

# ແຜນຈັດປະສົບການ

# ໜ່ວຍຄອບຄົວຂອງຂ້ອຍ

# ຊັ້ນອະນຸບານສຶກສາ ປີທີ 1


| | |
|---|---|
| ຮຽບຮຽງໂດຍ: | ແສງມະນີ ສຸພັນທະລົບ |
| | ຈຸນລາ ເຮັມທອງ |
| | ພູມະລີ ແສງຈັນນະວົງ |
| | ວຽງແກ້ວ ພົມມະຈັກ |
| | ສຸກສະຫວັນ ວິມານ |
| | ຈັນຫອມ ສຸວັນນະວົງ |
| | ສະຫວຽນ ສີຍະວັນນຸວົງ |
| | ລັດສະໝີ ບານເມືອງ |
| | ມະນີວອນ ອາດຜາສຸກ |
| | ພູມີ ພົມມະວົງສາ |
| | ອາງຄຳ ບຸດສະດີ |
| ກວດແກ້ໂດຍ: | ພວງຄຳ ສົມສະນິດ |
| | ທອງແກ້ວ ອາສາ |
| | ປາກຽນ ຫຼວງໄຊຊະນະ |
| | ສົມບູນ ມາສຸວັນ |
| | ເກດ ພັນລັກ |
| | ສີພາພອນ ມະນີວັນ |
| ເຂົ້າໜ້າໂດຍ: | ຈັນທະໄລ ເກີດຫຼ້າ |
| | ທອງດຳ ທອງສິນ |



ກະຊວງສຶກສາທິການ ແລະ ກິລາ

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

2012

# ຄຳນຳ

ແຜນການຈັດປະສົບການໜ່ວຍຄອບຄົວຂອງຂ້ອຍຮຽບຮຽງຂຶ້ນເພື່ອໃຫ້ຜູ້ບໍລິຫານການສຶກສາ ນຳໃຊ້ໃນການສ້າງເປັນແຜນການສອນ ແລະ ເປັນບ່ອນອີງໃນການແຕ່ງບົດສອນ.

ເນື້ອໃນຄວາມຮູ້ທີ່ກຳນົດໃນກິດຈະກຳການຫຼິ້ນ ແລະ ຮຽນໃນແຕ່ລະວັນມີລັກສະນະບູລະນາການ ຄວາມຮູ້ທາງດ້ານພາສາລາວ, ຄະນິດສາດ ແລະ ວິທະຍາສາດທົ່ວໄປ.

ກິດຈະກຳການຫຼິ້ນ ແລະ ຮຽນທີ່ນຳມາກຳນົດໃນແຜນການສອນສະບັບນີ້ປະກອບມີ 6 ກິດຈະກຳ ເຊັ່ນ: ກິດຈະກຳວົງມົນ, ການເຄື່ອນໄຫວ ແລະ ຈັງຫວະ, ສິລະປະສ້າງສັນ, ເກມການສຶກສາ, ຫຼິ້ນກາງແຈ້ງ ແລະ ຫຼິ້ນຕາມມຸມ. ກິດຈະກຳເຫຼົ່ານີ້ສ້າງຂຶ້ນເພື່ອໃຫ້ເດັກໄດ້ຮັບການພັດທະນາຕາມສະມັດຖະພາບການກຽມຄວາມພ້ອມທາງດ້ານຮ່າງກາຍ, ດ້ານອາລົມ ແລະ ຈິດໃຈ, ດ້ານສັງຄົມ, ດ້ານພາສາ ແລະ ດ້ານສະຕິປັນຍາກ່ອນເຂົ້າຮຽນໃນຊັ້ນປະຖົມຢ່າງມີຄຸນນະພາບ.

ແຜນການຈັດປະສົບການສະບັບນີ້ເນັ້ນການສອນແບບເອົາເດັກເປັນໃຈກາງ ໂດຍໃຫ້ເດັກໄດ້ ປະຕິບັດຕົວຈິງຜ່ານການຫຼິ້ນ ແລະ ຮຽນໂດຍມີຫຼັກການສຳຄັນດັ່ງນີ້:

1. ເດັກໄດ້ຮັບການກຽມຄວາມພ້ອມໃນທຸກດ້ານຕາມຄວາມສາມາດ ແລະ ທຳມະຊາດຂອງເດັກ ໂດຍຜ່ານການຫຼິ້ນ ແລະ ຮຽນຢ່າງເບີກບານມ່ວນຊື່ນ.
2. ເດັກໄດ້ຮຽນຮູ້ຕາມຄວາມສົນໃຈ, ຄວາມຕ້ອງການຈາກສິ່ງໃກ້ຕົວ, ຈາກທັກສະທີ່ງ່າຍໄປສູ່ທັກສະທີ່ຍາກຕາມລຳດັບ ໂດຍໄດ້ຮຽນຮູ້ເປັນລາຍບຸກຄົນ ແລະ ກຸ່ມ.
3. ການຈັດກິດຈະກຳການຫຼິ້ນ ແລະ ຮຽນແມ່ນໃຫ້ເດັກປະຕິບັດຕົວຈິງ ໂດຍເປີດໂອກາດ ໃຫ້ເດັກໄດ້ທົດລອງ, ປະດິດສ້າງຢ່າງສ້າງສັນ, ຄິດແກ້ໄຂບັນຫາ ແລະ ຄົ້ນພົບສິ່ງໃໝ່ ໆ ດ້ວຍຕົນເອງ.
4. ການສົ່ງເສີມປະສົບການຊີວິດໄດ້ເນັ້ນເນື້ອໃນທີ່ເດັກຄວາມຮຽນຮູ້ຈາກສັງຄົມ, ວັດທະນາທຳ ແລະ ສະພາບແວດລ້ອມທີ່ເດັກອາໄສຢູ່ໃນແຕ່ລະທ້ອງຖິ່ນ ແລະ ໃນນັ້ນໃຫ້ແຕ່ລະໂຮງຮຽນຄຳນຶງເຖິງຄວາມແຕກຕ່າງໃນການຮຽນຮູ້ຂອງເດັກແຕ່ລະຄົນ.

ນອກນັ້ນການນຳໃຊ້ຕົວຈິງໃນການສ້າງແຜນການສອນປະຈຳປີ, ເດືອນ, ອາທິດ ແລະ ປະຈຳວັນ ແລະ ການແຕ່ງບົດສອນຂອງແຕ່ລະໂຮງຮຽນ. ຈຳເປັນທີ່ຄູສອນຕ້ອງສຶກສາເນື້ອໃນທີ່ມີໃນປຶ້ມຄູ່ມືຄູ 6 ກິດຈະກຳເຊັ່ນ: ການເຄື່ອນໄຫວ ແລະ ຈັງຫວະ, ວົງມົນ, ສິລະປະສ້າງສັນ, ເກມການສຶກສາ, ຫຼິ້ນກາງແຈ້ງ ແລະ ຫຼິ້ນຕາມມຸມ. ສຶກສາວິທີການຈັດການຮຽນ-ການສອນ, ວິທີສ້າງຄຳຖາມ ແລະ ການບັນທຶກຂໍ້ມູນການຕິດຕາມພັດທະນາ ການຈາກປຶ້ມຄູ່ມືການຈັດກິດຈະກຳການຮຽນ-ການສອນ ແລະ ການຕິດຕາມປະເມີນຜົນ.

ຄະນະຮຽບຮຽງປຶ້ມແຜນການຈັດປະສົບການສະບັບນີ້ມີຄວາມຍິນດີຮັບຕ້ອນທຸກຄຳຄິດເຫັນທີ່ສ້າງສັນຈາກທ່ານຜູ້ຊົມໃຊ້ເພື່ອນຳໄປປັບປຸງປຶ້ມດັ່ງກ່າວໃຫ້ນັບມື້ດີຂຶ້ນໃນອະນາຄົດ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ


**ຈຸດປະສົງສຳລັບອາທິດທີ 1** 1-2

**1. ໜ່ວຍ ຄອບຄົວຂອງຂ້ອຍ, ອາທິດທີ 1: ມື້ທີ 1** **3**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈັງຫວະເພງ 3

ກິດຈະກຳວົງມົນ: ສະມາຊິກໃນຄອບຄົວ 4

ກິດຈະກຳສິລະປະສ້າງສັນ: ຈ້ຳເມັດ ເສັ້ນຊື່ເບິ້ງ 5

ກິດຈະກຳການຫຼິ້ນກາງແຈ້ງ: ເຄື່ອງຫຼິ້ນ ໃນເດີ່ນ 6

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 7

ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມອ່ານ 8

**2. ໜ່ວຍ ຄອບຄົວຂອງຂ້ອຍ, ອາທິດທີ 1: ມື້ທີ 2** **9**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຈິນຕະນາການ 9

ກິດຈະກຳວົງມົນ: ໜ້າທີ່ຮັບຜິດຊອບຂອງບຸກຄົນໃນຄອບຄົວ 10

ກິດຈະກຳສິລະປະສ້າງສັນ: ພັບຜ້າ 11

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ລູ່ລີ່ເຂົ້າສານ 12

ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນ 13

ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສຳຜັດ 14

**3. ໜ່ວຍ ຄອບຄົວຂອງຂ້ອຍ, ອາທິດທີ 1: ມື້ທີ 3** **15**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ 15

ກິດຈະກຳວົງມົນ: ອາຊີບຂອງບຸກຄົນໃນຄອບຄົວ 16

ກິດຈະກຳສິລະປະສ້າງສັນ: ຈ້ຳເມັດເສັ້ນຊື່ເບິ້ງ 17

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ນ້ຳຂຶ້ນ, ນ້ຳລົງ 18

ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນ 19

ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ສິລະປະສ້າງສັນ 20

**4. ໜ່ວຍ ຄອບຄົວຂອງຂ້ອຍ, ອາທິດທີ 1: ມື້ທີ 4** **21**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈັງຫວະເພງ 21

ກິດຈະກຳວົງມົນ: ຊ່ວຍເຫຼືອກັນໃນຄອບຄົວ 22

ກິດຈະກຳສິລະປະສ້າງສັນ: ຮ້ອຍທໍ່ດູດ 23

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ຮ່າຍນ້ຳໃສ່ແກ້ວ 24

ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບກັບພະຍັນຊະນະ 25

ກິດຈະກຳການຫຼິ້ນຕາມມຸມ: ຫຼິ້ນມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສຳຜັດ 26

**5. ໜ່ວຍ ຄອບຄົວຂອງຂ້ອຍ, ອາທິດທີ 1: ມື້ທີ 5** **27**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ 27

ກິດຈະກຳວົງມົນ: ຄວາມອົບອຸ່ນໃນຄອບຄົວ 28

ກິດຈະກຳສິລະປະສ້າງສັນ: ທາສີຮູບພາບ 29

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ລູ່ລີ່ເຂົ້າສານ 30

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 31
ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມເຄື່ອງຫຼິ້ນສຳຜັດ 32
**ຈຸດປະສົງສຳລັບອາທິດທີ 2** 33-34
**6. ໜ່ວຍ ຄອບຄົວຂອງຂ້ອຍ, ອາທິດທີ 2: ມື້ທີ 1** **35**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຂໍ້ຕົກລົງ 35
ກິດຈະກຳວົງມົນ: ຫ້ອງຕ່າງໆໃນເຮືອນ 36
ກິດຈະກຳສິລະປະສ້າງສັນ: ຕັດເຈ້ຍ 37
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ນ້ຳອຸ່ນ, ນ້ຳລົງ 38
ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນ 39
ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ 40
**7. ໜ່ວຍ ຄອບຄົວຂອງຂ້ອຍ, ອາທິດທີ 2: ມື້ທີ 2** **41**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ 41
ກິດຈະກຳວົງມົນ: ເຄື່ອງໃຊ້ໃນຫ້ອງນອນ ແລະ ການບົວລະບັດຮັກສາ 42
ກິດຈະກຳສິລະປະສ້າງສັນ: ຂີດເສັ້ນຊື່ 43
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ເກັບເຄື່ອງໃຊ້ໃນເຮືອນ 44
ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນ 45
ກິດຈະກຳການຫຼິ້ນຕາມມຸມ: ມຸມເກມການສຶກສາ ແລະ ມຸມສິລະປະສ້າງສັນ 46
**8. ໜ່ວຍ ຄອບຄົວຂອງຂ້ອຍ, ອາທິດທີ 2: ມື້ທີ 3** **47**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ 47
ກິດຈະກຳວົງມົນ: ເຄື່ອງໃຊ້ໃນຫ້ອງຮັບແຂກ ແລະ ການບົວລະບັດຮັກສາ 48
ກິດຈະກຳສິລະປະສ້າງສັນ: ປັ້ນດິນ 49
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນເຄື່ອງຫຼິ້ນໃນເດີ່ນ 50
ກິດຈະກຳເກມການສຶກສາ: ເກມລຽນລຳດັບຮູບພາບ 51
ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມສິລະປະສ້າງສັນ 52
**9. ໜ່ວຍ ຄອບຄົວຂອງຂ້ອຍ, ອາທິດທີ 2: ມື້ທີ 4** **53**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ 53
ກິດຈະກຳວົງມົນ: ເຄື່ອງໃຊ້ໃນຫ້ອງນ້ຳ ແລະ ການບົວລະບັດຮັກສາ 54
ກິດຈະກຳສິລະປະສ້າງສັນ: ຂີດເສັ້ນຊື່ 55
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ຮ່າຍນ້ຳໃສ່ແກ້ວ 56
ກິດຈະກຳເກມການສຶກສາ: ເກມຮູບພາບ 57
ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ 58
**10.ໜ່ວຍ ຄອບຄົວຂອງຂ້ອຍ, ອາທິດທີ 2: ມື້ທີ 5** **59**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ 59
ກິດຈະກຳວົງມົນ: ເຄື່ອງໃຊ້ໃນຫ້ອງຄົວ ແລະ ການບົວລະບັດຮັກສາ 60
ກິດຈະກຳສ້າງສັນ: ຕິດເຈ້ຍ 61
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ເຊືອງຜ້າ 62

| | |
|---|---|
| ກິດຈະກຳເກມການສຶກສາ: ເກມລຽນລຳດັບຮູບພາບ | 63 |
| ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ | 64 |
| **ຈຸດປະສົງສຳລັບອາທິດທີ 3** | 65-66 |
| **11.ໜ່ວຍ ຄອບຄົວຂອງຂ້ອຍ, ອາທິດທີ 3: ມື້ທີ 1** | **67** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈັງຫວະ | 67 |
| ກິດຈະກຳວົງມົນ: ປະຕິບັດລະບຽບ | 68 |
| ກິດຈະກຳສິລະປະສ້າງສັນ: ຂີດເສັ້ນຊື່ | 69 |
| ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ບຸ່ງເຄື່ອງ | 70 |
| ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ | 71 |
| ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະມຸມເກມການສຶກສາ | 72 |
| **12.ໜ່ວຍ ຄອບຄົວຂອງຂ້ອຍ, ອາທິດທີ 3: ມື້ທີ 2** | **73** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ | 73 |
| ກິດຈະກຳວົງມົນ: ນັບຖືຜູ້ໃຫຍ່ | 74 |
| ກິດຈະກຳສິລະປະສ້າງສັນ: ຮ້ອຍໝາກປັດ | 75 |
| ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ລູ່ລີ່ເຂົ້າສານ | 76 |
| ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນ | 77 |
| ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສຳຜັດ | 78 |
| **13.ໜ່ວຍ ຄອບຄົວຂອງຂ້ອຍ, ອາທິດທີ 3: ມື້ທີ 3** | **79** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ | 79 |
| ກິດຈະກຳວົງມົນ: ໜ້າທີ່ຂອງຕົນເອງ | 80 |
| ກິດຈະກຳສິລະປະສ້າງສັນ: ຂີດເສັ້ນຊື່ | 81 |
| ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ເກັບເຄື່ອງໃຊ້ໃນເຮືອນ | 82 |
| ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ | 83 |
| ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມບົດບາດສົມມຸດ | 84 |
| **14.ໜ່ວຍ ຄອບຄົວຂອງຂ້ອຍ, ອາທິດທີ 3: ມື້ທີ 4** | **85** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈັງຫວະ | 85 |
| ກິດຈະກຳວົງມົນ: ມ້ຽນເຄື່ອງຫຼິ້ນ ແລະ ເຄື່ອງໃຊ້ | 86 |
| ກິດຈະກຳສິລະປະສ້າງສັນ: ທາສີຮູບພາບ | 87 |
| ກິດຈະກຳການຫຼິ້ນກາງແຈ້ງ: ເຄື່ອງຫຼິ້ນໃນເດີ່ນ | 88 |
| ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ | 89 |
| ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສຳຜັດ | 90 |
| **15.ໜ່ວຍ ຄອບຄົວຂອງຂ້ອຍ, ອາທິດທີ 3: ມື້ທີ 5** | **91** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ | 91 |
| ກິດຈະກຳວົງມົນ: ຮັກສາເຄື່ອງໃຊ້ ແລະ ເຄື່ອງຫຼິ້ນ | 92 |
| ກິດຈະກຳສິລະປະສ້າງສັນ: ປັ້ນດິນ | 93 |
| ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ນ້ຳຂຶ້ນ, ນ້ຳລົງ | 94 |
| ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ | 99 |

ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມເຄື່ອງຫຼິ້ນສຳຜັດ 96
**ຈຸດປະສົງສຳລັບອາທິດທີ 4** 97-98
**16.ໜ່ວຍ ຄອບຄົວຂອງຂ້ອຍ, ອາທິດທີ 4: ມື້ທີ 1** **99**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຂໍ້ຕົກລົງ 99
ກິດຈະກຳວົງມົນ: ມາລະຍາດໃນການເວົ້າ, ຟັງ ແລະ ເບິ່ງ 100
ກິດຈະກຳສິລະປະສ້າງສັນ: ຂີດເສັ້ນຊື່ເນີ້ງ 101
ກິດຈະກຳການຫຼິ້ນກາງແຈ້ງ: ເຄື່ອງຫຼິ້ນໃນເດີ່ນ 102
ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 103
ກິດຈະກຳການຫຼິ້ນຕາມມຸມ: ມຸມເກມການສຶກສາ ແລະ ມຸມເຄື່ອງຫຼິ້ນສຳຜັດ 104
**17.ໜ່ວຍ ຄອບຄົວຂອງຂ້ອຍ, ອາທິດທີ 4: ມື້ທີ 2** **105**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ 105
ກິດຈະກຳວົງມົນຫົວຂໍ້: ມາລະຍາດໃນການກິນ ແລະ ດື່ມ 106
ກິດຈະກຳສິລະປະສ້າງສັນ: ປັ້ນດິນ 107
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ລູ່ລີ່ເຂົ້າສານ 108
ກິດຈະກຳເກມການສຶກສາ: ເກມລຽນລຳດັບຮູບພາບ 109
ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມເຄື່ອງຫຼິ້ນສຳຜັດ 110
**18.ໜ່ວຍ ຄອບຄົວຂອງຂ້ອຍ, ອາທິດທີ 4: ມື້ທີ 3** **111**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຈິນຕະນາການ 111
ກິດຈະກຳວົງມົນ: ມາລະຍາດໃນການນັ່ງ ແລະ ຍ່າງ 112
ກິດຈະກຳສິລະປະສ້າງສັນ: ຂີດຂຽນຕົວເລກ 113
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ເກັບເຄື່ອງໃຊ້ໃນເຮືອນ 114
ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 115
ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ 116
**19.ໜ່ວຍ ຄອບຄົວຂອງຂ້ອຍ, ອາທິດທີ 4: ມື້ທີ 4** **117**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ 117
ກິດຈະກຳວົງມົນ: ມາລະຍາດໃນການນົບ, ໄຫວ້ 118
ກິດຈະກຳສິລະປະສ້າງສັນ: ຂີດເສັ້ນຊື່ ເນີ້ງ 119
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ຕາກເຄື່ອງນຸ່ງ 120
ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນ 121
ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ 122
**20.ໜ່ວຍ ຄອບຄົວຂອງຂ້ອຍ, ອາທິດທີ 4: ມື້ທີ 5** **123**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ 123
ກິດຈະກຳວົງມົນ: ມາລະຍາດໃນການໄປ, ມາ 124
ກິດຈະກຳສິລະປະສ້າງສັນ: ຂີດເສັ້ນຊື່ເນີ້ງ 125
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ເຊື່ອງຜ້າ 126
ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 127
ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມບົດບາດສົມມຸດ 128
- ເອກະສານອ້າງອີງ 129

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

1. ເຮັດທ່າທາງຕາມຈັງຫວະເພງ ອາຫານດີມີປະໂຫຍດ, ຄອບຄົວຂອງຂ້ອຍ ຢ່າງມ່ວນຊື່ນ.
2. ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ເລັບມືສະອາດ ຢ່າງມ່ວນຊື່ນ.
3. ເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ປ້ອນອາຫານ ແລະ ຫອມແກ້ມ, ນາຍຄູສອນໜັງສື, ທະຫານຍິງປືນ ແລະ ແພດກວດຄົນເຈັບ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

ເພື່ອໃຫ້ເດັກສາມາດ:

1. ຮ້ອງເພງ ຄອບຄົວຂອງຂ້ອຍປະກອບທ່າທາງ.
2. ບອກສະມາຊິກໃນຄອບຄົວຂອງຕົນເອງ.
3. ເວົ້າເປັນຄຳຕາມຮູບພາບພໍ່, ແມ່, ເອື້ອຍ, ອ້າຍ ແລະ ນ້ອງ.
4. ເລົ່າຄຳຄ່ອງ ເຮືອນຫຼັງໜຶ່ງ ປະກອບທ່າທາງ.
5. ບອກອາຊີບ ແລະ ໜ້າທີ່ຮັບຜິດຊອບຂອງບຸກຄົນໃນຄອບຄົວ.
6. ນັບເລກປາກເປົ່າ 1-3.
7. ຟັງການເລົ່າເລື່ອງ ຮ່ວມກັບໝູ່ດ້ວຍຄວາມມ່ວນຊື່ນ.
8. ບອກຄວາມອົບອຸ່ນ ແລະ ການຊ່ວຍເຫຼືອ, ເບິ່ງແຍງກັນໃນຄອບຄົວ.
9. ອ່ານອອກສຽງພະຍັນຊະນະ ອ.

# ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກສາມາດ:

1. ຈ້ຳເມັດເສັ້ນຊື່ເບື້ອງຊ້າຍ ແຕ່ເທິງລົງລຸ່ມຕາມຮອຍຈ້ຳຖືກຕ້ອງ.
2. ພັບຜ້າແພມົນຕາມໃຈ.
3. ຈ້ຳເມັດເສັ້ນຊື່ເບື້ອງຊ້າຍ ແຕ່ເທິງລົງລຸ່ມຖືກຕ້ອງ.
4. ຮ້ອຍທໍ່ດູດເປັນຮູບຮ່າງຕ່າງໆຖືກຕ້ອງ.
5. ທາສີແດງ, ເຫຼືອງ, ຟ້າໃສ່ຮູບພາບສໍຖືກຕ້ອງ.

# ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນເຄື່ອງຫຼິ້ນໃນເດີ່ນ: ຕະລູດ, ລອດບ້ວງ ຢ່າງມ່ວນຊື່ນ ແລະ ປອດໄພ.
2. ຫຼິ້ນແບບຫຼິ້ນປະດິດສ້າງ ນ້ຳຂຶ້ນ, ນ້ຳລົງ ຢ່າງມ່ວນຊື່ນ ແລະ ປອດໄພ.

3. ຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.
4, ຫຼິ້ນນ້ຳ, ຫຼິ້ນຊາຍ: ຮ່າຍນ້ຳໃສ່ແກ້ວ ຢ່າງມ່ວນຊື່ນ ແລະ ປອດໄພ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກສາມາດ:

1. ຕໍ່ຮູບພາບຕາມແບບ ຮູບພາບບຸກຄົນໃນຄອບຄົວ: ພໍ່ ແມ່, ລູກ; ຮູບພາບ ແມ່ອູ້ມລູກຖືກຕ້ອງ.
2. ນຳຮູບພາບທີ່ຄືກັນມາຈັບຄູ່ກັນ ຮູບພາບ: ພໍ່, ແມ່, ອ້າຍ, ເອື້ອຍ ແລະ ນ້ອງຖືກຕ້ອງ.
3. ຈັບຄູ່ຮູບພາບທີ່ຄືກັນທີ່ມີຈຳນວນເທົ່າກັນມາຈັບຄູ່ກັນ 1-3 ຖືກຕ້ອງ.
4. ນຳຮູບພາບກັບພະຍັນຊະນະມາຈັບຄູ່ກັນຮູບພາບ: ແມ່ ມ, ອ້າຍ ອ ແລະ ນ້ອງ ນ ຖືກຕ້ອງ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.
3. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈັງຫວະ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈັງຫວະເພງ ອາຫານດີມີປະໂຫຍດ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດເພງ ອາຫານດີມີປະໂຫຍດ.
3. ການບໍລິຫານແອວ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານແອວ.
2. ໃຫ້ເດັກແລ່ນຕາມບໍລິເວນຫ້ອງຮຽນຕາມບາດເຄາະ ຊ້າ, ໄວ.
3. ຄູແນະນຳການເຮັດທ່າທາງຕາມຈັງຫວະເພງ ອາຫານດີມີປະໂຫຍດ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງຫາຍໃຈເຂົ້າ, ອອກຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງຕາມຈັງຫວະເພງ.
7. ສຶກສາອົບຮົມເດັກໃຫ້ມີ ຄວາມປອດໄພໃນເວລາເຮັດທ່າທາງຕາມຈັງຫວະເພງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈັງຫວະເພງຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້:  ສະມາຊິກໃນຄອບຄົວ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຮ້ອງເພງ ຄອບຄົວຂອງຂ້ອຍ ປະກອບທ່າທາງ.
2. ບອກສະມາຊິກໃນຄອບຄົວຂອງຕົນເອງ.
3. ເວົ້າເປັນຄຳຕາມຮູບພາບ: ພໍ່, ແມ່ ແລະ ເອື້ອຍ.

### II. ເນື້ອໃນຕົ້ນຕໍ

1. ການຮ້ອງເພງ ຄອບຄົວຂອງອ້ອຍ ປະກອບທ່າທາງ.
2. ສະມາຊິກໃນຄອບຄົວ: ພໍ່, ແມ່, ອ້າຍ, ເອື້ອຍ ແລະ ນ້ອງ.
3. ການເວົ້າເປັນຄຳຕາມຮູບພາບ: ພໍ່, ແມ່ ແລະ ເອື້ອຍ.

### III. ສື່ການຮຽນ-ການສອນ

1. ບົດເພງ ຄອບຄົວຂອງຂ້ອຍ (ປື້ມຄູ່ມືຄູ).
2. ຮູບພາບ ພໍ່, ແມ່ ແລະ ເອື້ອຍ.
3. ເຄື່ອງເຄາະຈັງຫວະ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບ ຄົນໃນຄອບຄົວຂອງເດັກ.
2. ໃຫ້ເດັກຮ້ອງເພງ ຄອບຄົວຂອງອ້ອຍ, ຄູສົນທະນາກັບເດັກກ່ຽວກັບເນື້ອໃນຂອງບົດເພງ.
3. ໃຫ້ເດັກບອກສະມາຊິກໃນຄອບຄົວ.
4. ໃຫ້ເດັກເວົ້າເປັນຄຳຕາມຮູບພາບ: ພໍ່, ແມ່ ແລະ ເອື້ອຍ.
5. ໃຫ້ເດັກເວົ້າຄືນ ກ່ຽວກັບການບອກສະມາຊິກໃນຄອບຄົວ, ການເວົ້າເປັນຄຳ ແລະ ຮ້ອງເພງຄືນ.
6. ສຶກສາອົບຮົມເດັກກ່ຽວກັບ ການນັບຖື, ຮັກແພງ ພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງ ແລະ ຕ້ອງເປັນເດັກຄຳຮູ້.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຮ້ອງເພງ ຄອບຄົວຂອງອ້ອຍ ປະກອບທ່າທາງ.
2. ການບອກສະມາຊິກໃນຄອບຄົວຂອງຕົນເອງ.
3. ການເວົ້າເປັນຄຳຕາມຮູບພາບ: ພໍ່, ແມ່ ແລະ ເອື້ອຍ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້:  ຈ້ຳເມັດເສັ້ນຊື່ເບື້ອງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຈ້ຳເມັດເສັ້ນຊື່ເບື້ອງຊ້າຍ ແຕ່ເທິງລົງລຸ່ມຕາມຮອຍຈ້ຳ ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຈ້ຳເມັດເສັ້ນຊື່ເບື້ອງຊ້າຍ ແຕ່ເທິງລົງລຸ່ມຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ສໍດຳ ຫຼື ສໍສີ.
2. ປຶ້ມຝຶກຫັດພາສາລາວເຫຼັ້ມທີ 1 ຫຼື ເຈ້ຍແບບຈ້ຳເມັດເສັ້ນຊື່ເບື້ອງຊ້າຍ ແຕ່ເທິງລົງລຸ່ມຕາມຮອຍຈ້ຳ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກສັ່ນຄໍ່ມື ແລະ ດີດນີ້ວມື.
2. ຄູແນະນຳສາທິດວິທີຈ້ຳເມັດເສັ້ນຊື່ເບື້ອງຊ້າຍ ແຕ່ເທິງລົງລຸ່ມຕາມຮອຍຈ້ຳ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຈ້ຳເມັດເສັ້ນຊື່ເບື້ອງຊ້າຍ ແຕ່ເທິງລົງລຸ່ມ ຕາມຮອຍຈ້ຳ.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້:  ເຄື່ອງຫຼິ້ນໃນເດີ່ນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນເຄື່ອງຫຼິ້ນໃນເດີ່ນຢ່າງມ່ວນຊື່ນ ແລະ ປອດໄພ

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເຄື່ອງຫຼິ້ນ: ຫຼິ້ນຕະລູດ ແລະ ລອດບ້ວງ.

### III. ສື່ການຮຽນ-ການສອນ

ເຄື່ອງຫຼິ້ນ: ຕະລູດ ແລະ ບ້ວງລອດ ຫຼື ເຄື່ອງຫຼິ້ນທີ່ມີໃນທ້ອງຖິ່ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກລຽນແຖວຢ່າງເປັນວົງມົນ.
2. ຄູແນະນຳກ່ຽວກັບການຫຼິ້ນຕະລູດ ແລະ ລອດບ້ວງ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບ ການຫຼິ້ນຕະລູດ ແລະ ລອດບ້ວງ.
5. ສຶກສາອົບຮົມເດັກ ກ່ຽວກັບການຫຼິ້ນຕະລູດ ແລະ ລອດບ້ວງຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ  ການຫຼິ້ນເຄື່ອງຫຼິ້ນໃນເດີ່ນຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຕໍ່ຮູບພາບຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ: ພໍ່, ແມ່ ແລະ ລູກ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ: ພໍ່, ແມ່ ແລະ ລູກ.
2. ບົດເພງ ຄອບຄົວຂອງຂ້ອຍ.
3. ເກມເກົ່າ ເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍມ້ຽນປີ້ມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຄອບຄົວຂອງຂ້ອຍ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຕໍ່ຮູບພາບຕາມແບບ.
2. ການມີສ່ວນຮ່ວມຂອງເດັກແຕ່ລະຄົນ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມບົດບາດສົມມຸດ: ປ້ອນເຂົ້າ ແລະ ອາບນ້ຳໃຫ້ຕຸກກະຕາ
2. ການຫຼິ້ນໃນມຸມອ່ານ: ສັງເກດ, ອ່ານຮູບພາບ ພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງ, ປຶ້ມເລື່ອງປະກອບຮູບພາບ.

### III. ສື່ການຮຽນ-ການສອນ

1. ບົດເພງ ຄອບຄົວຂອງຂ້ອຍ.
2. ຕຸກກະຕາ, ເຮືອນນ້ອຍ, ຊາມ, ຜ້າເຊັດໂຕ, ບ່ວງ, ຖ້ວຍ ແລະ ຈອກ.
3. ຮູບພາບພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງ ແລະ ປຶ້ມເລື່ອງປະກອບຮູບພາບ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຄອບຄົວຂອງຂ້ອຍ.
2. ຄູແນະນຳວິທີຫຼິ້ນຕາມມຸມບົດບາດສົມມຸດ, ມຸມອ່ານ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການລໍຖ້າ, ການແບ່ງປັນ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຢ່າງມ່ວນຊື່ນ.

## II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ເລັບມືສະອາດ.

## III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດຄຳຄ່ອງ ເລັບມືສະອາດ.
3. ການບໍລິຫານມື (ປື້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານມື.
2. ໃຫ້ເດັກແລ່ນຕາມບາດເຄາະ ຊ້າ, ໄວ.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ "ເລັບມືສະອາດ".
4. ໃຫ້ເດັກປະຕິບັດຕົວຈິງ.
5. ໃຫ້ເດັກເຮັດທ່າທາງສະບາຍດີ ພໍ່, ແມ່.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ມາລະຍາດໃນເວລາເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ໜ້າທີ່ຮັບຜິດຊອບຂອງບຸກຄົນໃນຄອບຄົວ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ເລົ່າຄຳຄ່ອງ ເຮືອນຫຼັງໜຶ່ງ ປະກອບທ່າທາງ.
2. ບອກໜ້າທີ່ຮັບຜິດຊອບຂອງບຸກຄົນໃນຄອບຄົວ.
3. ເວົ້າເປັນຄຳຕາມຮູບພາບ: ອ້າຍ ແລະ ນ້ອງ.

### II. ເນື້ອໃນຕົ້ນຕໍ

1. ການເລົ່າຄຳຄ່ອງ ເຮືອນຫຼັງໜຶ່ງ ປະກອບທ່າທາງ.
2. ໜ້າທີ່ຮັບຜິດຊອບ: ພໍ່ ເປັນຜູ້ເບິ່ງແຍງຄອບຄົວ, ແມ່ ເປັນຜູ້ແຕ່ງກິນ, ອ້າຍ, ເອື້ອຍ ແລະ ຂ້ອຍຊ່ວຍວຽກພໍ່ແມ່.
3. ການເວົ້າເປັນຄຳຕາມຮູບພາບ: ອ້າຍ ແລະ ນ້ອງ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ: ເຮືອນຫຼັງໜຶ່ງ (ປື້ມຄູ່ມືຄູ).
2. ຮູບພາບ: ພໍ່, ແມ່ ແລະ ເອື້ອຍ.
3. ຮູບພາບ: ອ້າຍ, ນ້ອງ.

### IV. ກິດຈະກຳການຮຽນ-ການສອນ

1. ຄູ ສົນທະນາກັບເດັກ ກ່ຽວກັບເຮືອນທີ່ເດັກອາໄສຢູ່.
2. ໃຫ້ເດັກເລົ່າຄຳຄ່ອງ ເຮືອນຫຼັງໜຶ່ງ ປະກອບທ່າທາງ ແລະ ສົນທະນາກ່ຽວກັບເນື້ອໃນຄຳຄ່ອງ.
3. ໃຫ້ເດັກສັງເກດຮູບພາບ, ຄູສົນທະນາກັບເດັກກ່ຽວກັບໜ້າທີ່ຮັບຜິດຊອບຂອງບຸກຄົນໃນຄອບຄົວ ແລະ ເດັກບອກໜ້າທີ່ຮັບຜິດຊອບຂອງຄົນໃນຄອບຄົວ.
4. ໃຫ້ເດັກເວົ້າເປັນຄຳຕາມຮູບພາບ: ອ້າຍ ແລະ ນ້ອງ.
5. ໃຫ້ເດັກເວົ້າຄືນ ການບອກໜ້າທີ່ຮັບຜິດຊອບຂອງບຸກຄົນຢູ່ໃນຄອບຄົວ, ເລົ່າຄຳຄ່ອງ ແລະ ເວົ້າເປັນ ຄຳຕາມຮູບພາບ.
6. ສຶກສາອົບຮົມເດັກກ່ຽວກັບ ການຊ່ວຍເຫຼືອພໍ່, ແມ່ , ອ້າຍ, ເອື້ອຍ ປັດກວາດເຮືອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການເລົ່າຄຳຄ່ອງ ເຮືອນຫຼັງໜຶ່ງ ປະກອບທ່າທາງ.
2. ການບອກໜ້າທີ່ຮັບຜິດຊອບຂອງບຸກຄົນໃນຄອບຄົວ.
3. ການເວົ້າເປັນຄຳຕາມຮູບພາບ: ອ້າຍ ແລະ ນ້ອງ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້:  ພັບຜ້າ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ພັບຜ້າມົນຕາມໃຈ.

### II. ເນື້ອໃນຕົ້ນຕໍ

ການພັບຜ້າມົນຕາມໃຈ.

### III. ສື່ການຮຽນ-ການສອນ

ຜ້າມົນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກກຳມື ແລະ ແບມື.
2. ຄູແນະນຳ, ສາທິດວິທີ ພັບ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການອະນາໄມ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມເອົາໃຈໃສ່ໃນການພັບຜ້າມົນຕາມໃຈ.
2. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້:  ແບບຫຼິ້ນ ລູ່ລີ່ເຂົ້າສານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ລູ່ລີເຂົ້າສານ ແລະ ວິທີຫຼິ້ນ (ປຶ້ມຄູ່ມືຄູ).
2. ເຄື່ອງເຄາະຈັງຫວະ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກແລ່ນຊ້າໆຕາມບາດເຄາະ ຊ້າ, ໄວ.
2. ຄູແນະນຳ ແລະ ສາທິດກ່ຽວກັບ ການຫຼິ້ນແບບຫຼິ້ນ ລູ່ລີເຂົ້າສານ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ລູ່ລີເຂົ້າສານ.
5. ສຶກສາອົບຮົມເດັກກ່ຽວກັບ ການຫຼິ້ນແບບຫຼິ້ນ ລູລີ່ເຂົ້າສານ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບທີ່ຄືກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ນຳຮູບທີ່ຄືກັນມາຈັບຄູ່ກັນຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຮູບພາບທີ່ຄືກັນ: ພໍ່, ແມ່, ອ້າຍ, ເອື້ອຍ ແລະ ນ້ອງ.

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຮູບພາບທີ່ຄືກັນ: ພໍ່, ແມ່, ອ້າຍ, ເອື້ອຍ ແລະ ນ້ອງ.
2. ບົດຄຳຄ່ອງ ເຮືອນຫຼັງໜຶ່ງ.
3. ເກມເກົ່າ ເກມຕໍ່ຮູບພາບບຸກຄົນໃນຄອບຄົວ: ພໍ່, ແມ່ ແລະ ລູກ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ເຮືອນຫຼັງໜຶ່ງ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຈັບຄູ່ຮູບພາບທີ່ຄືກັນ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ, ແລະ ການເກັບມ້ຽນເກມ ໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຈັບຄູ່ຮູບພາບທີ່ຄືກັນ.
2. ການມີສ່ວນຮ່ວມຂອງເດັກແຕ່ລະຄົນ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມບົດບາດສົມມຸດ: ເປັນພໍ່, ແມ່ ປ້ອນເຂົ້າລູກ
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ຕໍ່ບ໋ອກ ສາມແຈ, ສີ່ແຈ ເປັນເຮືອນນ້ອຍ

### III. ສື່ການຮຽນ-ການສອນ

1. ຕຸກກະຕາ, ເຄື່ອງນຸ່ງ, ບ່ວງ, ຖ້ວຍ, ຊາມ ແລະ ຈອກ.
2. ບ໋ອກສາມແຈ, ສີ່ແຈ.
3. ບົດເພງ ຄອບຄົວຂອງຂ້ອຍ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຄອບຄົວຂອງຂ້ອຍ.
2. ຄູແນະນຳວິທີຫຼິ້ນຕາມມຸມບົດບາດສົມມຸດ, ມຸມເຄື່ອງຫຼິ້ນສຳຜັດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າຢ່າງມ່ວນຊື່ນ.

## II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ, ນາຍຄູສອນໜັງສື, ທະຫານຍິງປືນ ແລະ ແພດກວດຄົນເຈັບ.

## III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານທ້ອງ ແລະ ຫຼັງ (ປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກ ບໍລິຫານທ້ອງ ແລະ ຫຼັງ.
2. ໃຫ້ເດັກແລ່ນຕາມບາດເຄາະ ຊ້າ, ໄວ.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການເລື່ອງທີ່ຄູເລົ່າ: ນາຍຄູສອນໜັງສື, ທະຫານຍິງປືນ ແລະ ແພດກວດຄົນເຈັບ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງດົມດອກໄມ້.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້:  ອາຊີບຂອງບຸກຄົນໃນຄອບຄົວ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກອາຊີບຂອງບຸກຄົນໃນຄອບຄົວ.
2. ນັບເລກປາກເປົ່າ 1-3.

### II. ເນື້ອໃນຕົ້ນຕໍ

1. ອາຊີບຂອງບຸກຄົນໃນຄອບຄົວ: ພໍ່ ເປັນທະຫານ...; ແມ່ ເປັນຄູ... ; ເອື້ອຍ, ອ້າຍ ແລະ ຂ້ອຍ ເປັນນັກຮຽນ.
2. ການນັບເລກປາກເປົ່າ 1-3.

### III. ສື່ການຮຽນ-ການສອນ

ບົດເພງ ຄອບຄົວຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຄອບຄົວຂອງຂ້ອຍ ປະກອບທ່າທາງ.
2. ຄູສົນທະນາ ກັບ ເດັກ ກ່ຽວກັບອາຊີບຂອງບຸກຄົນໃນຄອບຄົວ.
3. ໃຫ້ເດັກບອກອາຊີບຂອງບຸກຄົນໃນຄອບຄົວ.
4. ໃຫ້ເດັກນັບເລກປາກເປົ່າ 1-3.
5. ໃຫ້ເດັກເວົ້າຄືນການບອກອາຊີບຂອງບຸກຄົນໃນຄອບຄົວ ແລະ ການນັບປາກເປົ່າແຕ່ 1-3.
6. ສຶກສາອົບຮົມເດັກກ່ຽວກັບ ການນັບຖື, ຮັກແພງ ພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງ ແລະ  ເປັນເດັກຄຳຮູ້.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກອາຊີບຂອງບຸກຄົນໃນຄອບຄົວ.
2. ການນັບເລກປາກເປົ່າ 1-3.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຈ້ຳເມັດເສັ້ນຊື່ເນີ້ງ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຈ້ຳເມັດເສັ້ນຊື່ເນີ້ງຊ້າຍ ແຕ່ເທິງລົງລຸ່ມຕາມຮອຍຈ້ຳຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການຈ້ຳເມັດເສັ້ນຊື່ເນີ້ງຊ້າຍ ແລະ ເທິງລົງລຸ່ມຕາມຮອຍຈ້ຳ.

## III. ສື່ການຮຽນ-ການສອນ

1. ສໍດຳ.
2. ປຶ້ມບົດເຝິກຫັດພາສາລາວ ເຫຼັ້ມທີ 1 ຫຼື ເຈ້ຍແບບຈ້ຳເມັດເສັ້ນຊື່ເນີ້ງຊ້າຍ ແຕ່ເທິງລົງລຸ່ມ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກດິດນີ້ວມືຊ້າຍ, ຂວາ.
2. ຄູແນະນຳ, ສາທິດວິທີຈ້ຳເມັດເປັນເສັ້ນຊື່ເນີ້ງຊ້າຍແຕ່ເທິງລົງລຸ່ມ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນອຸປະກອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຈ້ຳເມັດເສັ້ນຊື່ເນີ້ງຊ້າຍ ແຕ່ເທິງລົງລຸ່ມຕາມຮອຍຈ້ຳ.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ນ້ຳຂຶ້ນ, ນ້ຳລົງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ "ນ້ຳຂຶ້ນ, ນ້ຳລົງ" ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ນ້ຳຂຶ້ນ, ນ້ຳລົງ.

### III. ສື່ການຮຽນ-ການສອນ

1. ສໍຂາວ.
2. ບົດເພງ ຄອບຄົວຂອງຂ້ອຍ.
3. ວິທີຫຼິ້ນ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຄອບຄົວຂອງຂ້ອຍ.
2. ຄູແນະນຳ ແລະ ສາທິດ ກ່ຽວກັບການຫຼິ້ນ ນ້ຳຂຶ້ນ, ນ້ຳລົງ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ນ້ຳຂຶ້ນ, ນ້ຳລົງ.
5. ສຶກສາອົບຮົມເດັກກ່ຽວກັບ ການຫຼິ້ນແບບຫຼິ້ນ ນ້ຳຂຶ້ນ, ນ້ຳລົງ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນປະດິດສ້າງ ນ້ຳຂຶ້ນ, ນ້ຳລົງ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບທີ່ຄືກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນເກມຈັບຄູ່ຮູບພາບທີ່ຄືກັນ: ຄົນທີ່ມີຈຳນວນເທົ່າກັນມາຈັບຄູ່ກັນຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຮູບພາບທີ່ຄືກັນ: ຄົນທີ່ມີຈຳນວນເທົ່າກັນແຕ່ 1-3.

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຮູບພາບທີ່ຄືກັນ: ຄົນທີ່ມີຈຳນວນເທົ່າກັນ ແຕ່ 1-3.
2. ບົດເພງ ຄອບຄົວຂອງຂ້ອຍ.
3. ເກມເກົ່າ ເກມຈັບຄູ່ຮູບພາບທີ່ຄືກັນ: ພໍ່, ແມ່, ອ້າຍ, ເອື້ອຍ ແລະ ນ້ອງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຄອບຄົວຂອງຂ້ອຍ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມ ຈັບຄູ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຈັບຄູ່ຮູບພາບທີ່ຄືກັນ: ຄົນທີ່ມີຈຳນວນເທົ່າກັນ.
2. ການມີສ່ວນຮ່ວມຂອງເດັກແຕ່ລະຄົນ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ

1. ຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມສິລະປະສ້າງສັນຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມອ່ານ: ການສັງເກດ, ອ່ານຮູບພາບ ຄູ, ໝໍ, ທະຫານ, ປຶ້ມເລື່ອງປະກອບຮູບພາບ, ປຶ້ມນິທານ.
2. ການຫຼິ້ນໃນມຸມສິລະປະສ້າງສັນ: ຈ້ຳເມັດເສັ້ນຊື່ເບື້ອງຊ້າຍ ແຕ່ເທິງລົງລຸ່ມຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ຮູບພາບ ຄູ, ໝໍ, ທະຫານ, ປຶ້ມເລື່ອງ, ປຶ້ມນິທານ.
2. ສໍດຳ ແລະ ປຶ້ມເຝິກຫັດພາສາລາວ ເຫຼັ້ມ 1 ຫຼື ເຈ້ຍແບບຈ້ຳເມັດເສັ້ນຊື່ເບື້ອງຊ້າຍ ແຕ່ເທິງລົງລຸ່ມຕາມຮອຍຈ້ຳ.          .
3. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບ ມຸມທີ່ເຄີຍຫຼິ້ນຜ່ານມາ.
2. ຄູແນະນຳວິທີຫຼິ້ນຕາມມຸມອ່ານ, ມຸມເຄື່ອງຫຼິ້ນສຳຜັດ ແລະ ເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນຕາມມຸມອ່ານ ຢ່າງມ່ວນຊື່ນ.
2. ການຫຼິ້ນຕາມມຸມ ສິລະປະສ້າງສັນຖືກຕ້ອງ ແລະ ມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈັງຫວະ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈັງຫວະເພງຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈັງຫວະເພງ ຄອບຄົວຂອງຂ້ອຍ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດເພງ ຄອບຄົວຂອງຂ້ອຍ.
3. ການບໍລິຫານຂາ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຂາ.
2. ໃຫ້ເດັກຍ່າງໃນບໍລິເວນຫ້ອງຮຽນຕາມບາດເຄາະ ຊ້າ, ໄວ.
3. ຄູແນະນຳການເຮັດທ່າທາງຕາມຈັງຫວະເພງ ຄອບຄົວຂອງຂ້ອຍ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງ ແລະ ຢຽດຂາຊື່.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບການຍ່າງ, ການເຮັດທ່າທາງຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈັງຫວະເພງຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ຊ່ວຍເຫຼືອກັນໃນຄອບຄົວ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຟັງເລົ່າເລື່ອງຮ່ວມກັບໝູ່ເພື່ອນດ້ວຍຄວາມມ່ວນຊື່ນ
2. ບອກການຊ່ວຍເຫຼືອ, ເບິ່ງແຍງກັນໃນຄອບຄົວ
3. ອ່ານອອກສຽງພະຍັນຊະນະ ອ.

### II. ເນື້ອໃນຕົ້ນຕໍ

1. ການຟັງເລົ່າເລື່ອງ ເສືອສາມອ້າຍນ້ອງ.
2. ການຊ່ວຍເຫຼືອ, ເບິ່ງແຍງກັນໃນຄອບຄົວ: ການເບິ່ງແຍງກັນເວລາບໍ່ສະບາຍ, ຊ່ວຍເຮັດວຽກເຮືອນ.
3. ການອ່ານອອກສຽງພະຍັນຊະນະ ອ.

### III. ສື່ການຮຽນ-ການສອນ

1. ຫຸ່ນ: ພໍ່ເຖົ້າ ແລະ ແມ່ເຖົ້າ,
2. ບັດພະຍັນຊະນະ ອ.
3. ບົດເລື່ອງ ເສືອສາມອ້າຍນ້ອງ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບບົດເລື່ອງທີ່ເຄີຍໄດ້ຟັງ.
2. ຄູໃຊ້ຫຸ່ນ ເລົ່າເລື່ອງ ເສືອສາມອ້າຍນ້ອງ ແລະ ສົນທະນາກັບເດັກກ່ຽວກັບເນື້ອໃນຂອງນິທານບົດເລື່ອງ.
3. ໃຫ້ເດັກບອກການຊ່ວຍເຫຼືອກັນໃນຄອບຄົວ.
4. ໃຫ້ເດັກອ່ານອອກສຽງພະຍັນຊະນະ ອ.
5. ໃຫ້ເດັກເວົ້າຄືນ ກ່ຽວກັບການຟັງເລື່ອງ, ການຊ່ວຍເຫຼືອເບິ່ງແຍງກັນໃນຄອບຄົວ ແລະ ການອ່ານອອກສຽງພະຍັນຊະນະ.
6. ສຶກສາອົບຮົມເດັກກ່ຽວກັບ ການຊ່ວຍພໍ່, ແມ່, ອ້າຍ, ເອື້ອຍປັດກວາດເຮືອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຟັງເລົ່າເລື່ອງຮ່ວມກັບໝູ່ເພື່ອນດ້ວຍຄວາມມ່ວນຊື່ນ.
2. ການບອກການຊ່ວຍເຫຼືອເບິ່ງແຍງກັນໃນຄອບຄົວ.
3. ການອ່ານອອກສຽງພະຍັນຊະນະ ອ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຮ້ອຍທໍ່ດູດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຮ້ອຍທໍ່ດູດເປັນຮູບຮ່າງຕ່າງໆ ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຮ້ອຍທໍ່ດູດ ເປັນຮູບຮ່າງຕ່າງໆ.

### III. ສື່ການຮຽນ-ການສອນ

ເຊືອກຟາງ, ທໍ່ດູດ ຫຼື ໄມ້ປ່ອງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຈັບເຊືອກ ຮ້ອຍຢູ່ກາງຫາວ.
2. ຄູແນະນຳ, ສາທິດການຮ້ອຍໃຫ້ເປັນຮູບຮ່າງຕ່າງໆ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຮ້ອຍທໍ່ດູດເປັນຮູບຮ່າງຕ່າງໆ.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້:  ແບບຫຼິ້ນ ຣ່າຍນ້ຳໃສ່ແກ້ວ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ ຣ່າຍນ້ຳໃສ່ແກ້ວ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ຣ່າຍນ້ຳໃສ່ແກ້ວ.

### III. ສື່ການຮຽນ-ການສອນ

1. ຄຸນ້ຳ, ແກ້ວ ຫຼື ກະຕຸກຢາງ, ຈອກ ຫຼື ໂອ ແລະ ໝາກຫວິດ.
2. ບົດເພງ ເຮືອນຂອງຫຼານ.
3. ວິທີຫຼິ້ນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຢືນລຽນແຖວເຮັດທ່າທາງປະກອບເພງ ເຮືອນຂອງຫຼານ.
2. ຄູ ແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ຣ່າຍນ້ຳໃສ່ແກ້ວ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ຣ່າຍນ້ຳໃສ່ແກ້ວ.
5. ສຶກສາອົບຮົມເດັກກ່ຽວກັບ ການຫຼິ້ນແບບຫຼິ້ນ ຣ່າຍນ້ຳໃສ່ແກ້ວ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນປະດິດສ້າງ ຣ່າຍນ້ຳໃສ່ແກ້ວ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບກັບພະຍັນຊະນະ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ນຳເອົາຮູບພາບກັບພະຍັນຊະນະມາຈັບຄູ່ກັນຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມ ຈັບຄູ່ຮູບພາບກັບພະຍັນຊະນະ: ຮູບແມ່ ມ, ອ້າຍ ອ ແລະ ນ້ອງ ນ.

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຮູບກັບພະຍັນຊະນະ: ຮູບແມ່ ມ, ອ້າຍ ອ ແລະ ນ້ອງ ນ.
2. ບົດເພງ ຄອບຄົວຂອງຂ້ອຍ.
3. ເກມເກົ່າ ເກມຈັບຄູ່ຮູບພາບທີ່ຄືກັນ ຄົນທີ່ມີຈຳນວນເທົ່າກັນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຄອບຄົວຂອງຂ້ອຍ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມ ຈັບຄູ່ຮູບພາບກັບພະຍັນຊະນະ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການລໍຖ້າ, ການແບ່ງປັນ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບກັບພະຍັນຊະນະ.
2. ການມີສ່ວນຮ່ວມຂອງເດັກແຕ່ລະຄົນ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ
2. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມບົດບາດສົມມຸດ ປ້ອນເຂົ້າ ແລະ ແຕ່ງຕົວໃຫ້ນ້ອງ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຫຼິ້ນບູ້ອກ ກ້ອນ, ແປ ປະກອບຮູບຕ່າງໆຕາມໃຈ.

### III. ສື່ການຮຽນ-ການສອນ

1. ຕຸກກະຕາ, ຫວີ, ຢາງມັດຜົມ, ແປ້ງເດັກ, ຖ້ວຍ, ບ່ວງ ແລະ ຈອກ .
2. ບູ້ອກກ້ອນ, ແປ (ໄມ້ ຫຼື ປຼາສະຕິກ).
3. ບົດເພງ ຄອບຄົວຂອງຂ້ອຍ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຄອບຄົວຂອງຂ້ອຍ.
2. ຄູແນະນຳວິທີຫຼິ້ນໃນມຸມບົດບາດສົມມຸດ, ມຸມເຄື່ອງຫຼິ້ນສຳພັດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນໃນມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການລໍຄອຍ, ການແບ່ງປັນ, ຜັດປ່ຽນກັນຫຼິ້ນ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າການສະແດງຄວາມຮັກຂອງແມ່ທີ່ມີຕໍ່ລູກ: ປ້ອນອາຫານ ແລະ ຫອມແກ້ມ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານແຂນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານແຂນ.
2. ໃຫ້ເດັກຍ່າງໃນບໍລິເວນຫ້ອງຕາມບາດເຄາະ ຊ້າ, ໄວ.
3. ຄູແນະນຳ ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ: ການສະແດງຄວາມຮັກຂອງແມ່ທີ່ມີຕໍ່ລູກປ້ອນອາຫານ ແລະ ຫອມແກ້ມ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງຫາຍໃຈເຂົ້າ, ອອກຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ.
7. ສຶກສາອົບຮົມເດັກກ່ຽວກັບ ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ຄວາມອົບອຸ່ນໃນຄອບຄົວ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຟັງເລົ່າເລື່ອງຮ່ວມກັບໝູ່ເພື່ອນດ້ວຍຄວາມມ່ວນຊື່ນ.
2. ບອກຄວາມອົບອຸ່ນໃນຄອບຄົວ.

### II. ເນື້ອໃນຕົ້ນຕໍ

1. ການຟັງເລົ່າເລື່ອງ ຄອບຄົວຂອງຂ້ອຍ.
2. ການສະແດງຄວາມຮັກແພງ ແລະ ຄວາມອົບອຸ່ນໃນຄອບຄົວ: ກອດ, ຫອມ, ໃຫ້ກຳລັງໃຈ, ອ້າຍ, ເອື້ອຍ, ນ້ອງຫຼິ້ນຮ່ວມກັນ ແລະ ພໍ່ເຖົ້າ, ແມ່ເຖົ້າເລົ່ານິທານ.

### III. ສື່ການຮຽນ-ການສອນ

1. ຮູບພາບປະກອບບົດເລື່ອງ ຄອບຄົວຂອງຂ້ອຍ (ປຶ້ມຄູ່ມືຄູ).
2. ຮູບພາບພໍ່ແມ່ກອດລູກ, ອ້າຍ, ເອື້ອຍ, ນ້ອງຫຼິ້ນຮ່ວມກັນ ແລະ ພໍ່ເຖົ້າ, ແມ່ເຖົ້າເລົ່ານິທານ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບເລື່ອງທີ່ເຄີຍໄດ້ຟັງ.
2. ຄູເລົ່າເລື່ອງ ຄອບຄົວຂອງຂ້ອຍ ແລະ ສົນທະນາກັບເດັກກ່ຽວກັບເນື້ອໃນຂອງບົດເລື່ອງ.
3. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກກ່ຽວກັບຄວາມອົບອຸ່ນໃນຄອບຄົວ.
4. ໃຫ້ເດັກບອກຄວາມອົບອຸ່ນໃນຄອບຄົວ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຟັງເລື່ອງ ແລະ ຄວາມອົບອຸ່ນໃນຄອບຄົວ.
6. ສຶກສາອົບຮົມເດັກກ່ຽວກັບ ການນັບຖືຮັກແພງພໍ່, ແມ່, ພໍ່ເຖົ້າ, ແມ່ເຖົ້າ, ອ້າຍ, ເອື້ອຍ, ນ້ອງ ແລະ ການໃຫ້ກຳລັງໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຟັງເລົ່າເລື່ອງຮ່ວມກັບໝູ່ເພື່ອນດ້ວຍຄວາມມ່ວນຊື່ນ.
2. ການບອກ ຄວາມອົບອຸ່ນໃນຄອບຄົວ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້:  ທາສີຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ທາສີແດງ, ເຫຼືອງ ແລະ ຟ້າໃສ່ຮູບພາບສໍຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການທາສີແດງ, ເຫຼືອງ ແລະ ຟ້າ ໃສ່ຮູບພາບສໍ.

### III. ສື່ການຮຽນ-ການສອນ

1. ສໍສີດຳແດງ, ສີເຫຼືອງ.
2. ປຶ້ມບົດເຝິກຫັດ ພາສາລາວ ເຫຼັ້ມທີ 1 ຫຼື ເຈ້ຍແບບຮູບພາບສໍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງທາສີຢູ່ກາງຫາວດ້ວຍມືເປົ່າ.
2. ຄູແນະນຳ, ສາທິດວິທີທາສີ ຮູບສໍເທື່ອລະຮູບ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນ ອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການທາສີແດງ, ເຫຼືອງ ແລະ ຟ້າ ໃສ່ຮູບພາບສໍ.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກໍາການຫຼິ້ນກາງແຈ້ງ

## ຫົວຂໍ້:  ແບບຫຼິ້ນ ລູ່ລີ່ເຂົ້າສານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ.

### III. ສື່ການຮຽນ-ການສອນ

ບົດຄໍາຄ່ອງ ລູລີ່ເຂົ້າສານ ແລະ ວິທີຫຼິ້ນ (ປື້ມຄູ່ມືຄູ).

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຄອບຄົວຂອງຂ້ອຍ.
2. ຄູ ແນະນໍາ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ລູລີ່ເຂົ້າສານ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.
5. ສຶກສາອົບຮົມເດັກກ່ຽວກັບ ການຫຼິ້ນແບບຫຼິ້ນ ລູລີ່ເຂົ້າສານ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບຕາມແບບຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ແມ່ອູ້ມລູກ

## III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ແມ່ອຸ້ມລູກ.
2. ບົດຄຳຄ່ອງ ເຮືອນຫຼັງໜຶ່ງ.
3. ເກມເກົ່າ ເກມຈັບຄູ່ຮູບພາບພະຍັນຊະນະ: ແມ່ ມ, ອ້າຍ ອ ແລະ ນ້ອງ ນ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ເຮືອນຫຼັງໜຶ່ງ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກ ຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຕໍ່ຮູບພາບຕາມແບບ.
2. ການມີສ່ວນຮ່ວມຂອງເດັກແຕ່ລະຄົນ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ

1. ຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມອ່ານ: ສັງເກດ, ອ່ານຮູບພາບ ແມ່ກອດລູກ, ອ້າຍນ້ອງຫຼິ້ນຮ່ວມກັນ, ປຶ້ມເລື່ອງປະກອບຮູບພາບເລື່ອງ: ຄວາມອົບອຸ່ນໃນຄອບຄົວ.
2. ການຫຼິ້ນໃນມຸມສຳຜັດເຄື່ອງດົນຕີ: ຕີກອງ, ສັ່ນກະແຊັກ, ເປົ່າແຄນ, ຕີລະນາດ.

### III. ສື່ການຮຽນ-ການສອນ

1. ຮູບພາບແມ່ກອດລູກ, ອ້າຍນ້ອງຫຼິ້ນຮ່ວມກັນ, ປຶ້ມເລື່ອງປະກອບຮູບພາບຄວາມອົບອຸ່ນໃນຄອບຄົວ.
2. ກອງ, ກະແຊັກ, ແຄນ, ລະນາດນ້ອຍ ຫຼື ເຄື່ອງດົນຕີທີ່ມີໃນທ້ອງຖິ່ນ.
3. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບມຸມທີ່ເຄີຍຫຼິ້ນຜ່ານມາ.
2. ຄູແນະນຳວິທີຫຼິ້ນຕາມມຸມອ່ານ, ມຸມເຄື່ອງຫຼິ້ນສຳຜັດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບ ການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນຕາມມຸມອ່ານ ຢ່າງມ່ວນຊື່ນ.
2. ການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.

# ຈຸດປະສົງສໍາລັບອາທິດທີ 2

## ກິດຈະກໍາການເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກສາມາດ:

1. ເຮັດທ່າທາງຕາມຂໍ້ຕົກລົງ ເຄາະ 1 ບາດ ເຮັດທ່າທາງອຸ້ມນ້ອງ ແລະ ເຄາະ 2 ບາດ ເຮັດທ່າທາງຫວ່ານ ເຂົ້າໃຫ້ໄກ່ກິນ ຖືກຕ້ອງ ແລະ ມ່ວນຊື່ນ.
2. ເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ຜູ້ເຖົ້າຍ່າງ, ອາບນໍ້າ ແລະ ສະຜົມ ປະກອບເນື້ອໃນຄໍາຄ່ອງຄອບຄົວຂອງອ້ອຍ, ເຮືອນຫຼັງໜຶ່ງ ຢ່າງມ່ວນຊື່ນ.

## ກິດຈະກໍາວົງມົນ

ເພື່ອໃຫ້ເດັກສາມາດ:

1. ຮ້ອງເພງ ເຮືອນຂອງຫຼານ ປະກອບທ່າທາງ ແລະ ບອກຊື່ຫ້ອງຕ່າງໆໃນເຮືອນ.
2. ເລົ່າຄໍາຄ່ອງ ຫ້ອງນອນຂອງອ້ອຍ ປະກອບທ່າທາງ.
3. ບອກຊື່ເຄື່ອງໃຊ້ໃນຫ້ອງນອນ, ຫ້ອງຮັບແຂກ, ຫ້ອງນໍ້າ , ຫ້ອງຄົວ ແລະ ການບົວລະບັດຮັກສາ.
4. ເວົ້າເປັນຄໍາຕາມຮູບພາບ ໝອນ, ສະບູ, ໂອ, ຖ້ວຍ ແລະ ບ່ວງປຽບທຽບຮູບໂຕະ ສັ້ນ, ຍາວ.

## ກິດຈະກໍາສິລະປະສ້າງສັນ

ເພື່ອໃຫ້ເດັກສາມາດ:

1. ຕັດເຈ້ຍເປັນເສັ້ນຊື່ ແລະ ຕິດເຈ້ຍຮູບວົງມົນ 3 ວົງຕິດກັນຖືກຕ້ອງ.
2. ຂີດເສັ້ນຊື່ແຕ່ ເທິງລົງລຸ່ມຕາມຮອຍຈໍ້າຖືກຕ້ອງ ແລະ ປັ້ນໜ່ວຍມົນຕາມຈໍານວນ 3.

## ກິດຈະກໍາການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນປະດິດສ້າງນໍ້າຂຶ້ນ, ນໍ້າລົງ, ເກັບເຄື່ອງຫຼິ້ນ ຢ່າງມ່ວນຊື່ນ ແລະ ປອດໄພ.
2. ຫຼິ້ນເຄື່ອງຫຼິ້ນໃນເດີ່ນ: ລອດບ້ວງ ແລະ ໂອ້ນຊາ ຢ່າງມ່ວນຊື່ນ ແລະ ປອດໄພ.
3. ຫຼິ້ນນໍ້າ, ຫຼິ້ນຊາຍ: ຣ່າຍນໍ້າໃສ່ແກ້ວ ຢ່າງມ່ວນຊື່ນ ແລະ ປອດໄພ.
4. ຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກສາມາດ:

1. ນຳຮູບພາບທີ່ຄືກັນມາຈັບຄູ່ກັນ: ຫ້ອງນອນ, ຫ້ອງຮັບແຂກ, ຫ້ອງນ້ຳ, ຫ້ອງຄົວ, ຕູ້, ຕຽງ, ໝອນຖືກຕ້ອງ.
2. ລຽນລຳດັບຮູບພາບ: ຕຽງ ແລະ ໝໍ້ ແຕ່ ນ້ອຍ ຫາ ໃຫຍ່ຖືກຕ້ອງ.
3. ຕໍ່ຮູບພາບຕາມແບບ ຮູບພາບເດັກນ້ອຍອະນາໄມຫ້ອງນ້ຳຖືກຕ້ອງ.

# ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດ, ມຸມເກມການສຶກສາ, ມຸມສິລະປະສ້າງສັນ, ມຸມອ່ານ ແລະ ມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຂໍ້ຕົກລົງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຂໍ້ຕົກລົງຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຂໍ້ຕົກລົງເຄາະ 1 ບາດ ເຮັດທ່າທາງອູ້ມນ້ອງ, ເຄາະ 2 ບາດ ເຮັດທ່າທາງຫວ່ານເຂົ້າໃຫ້ໄກ່.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານຕີນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຕີນ.
2. ໃຫ້ເດັກແລ່ນຊ້າໆຕາມບໍລິເວນຫ້ອງຮຽນຕາມບາດເຄາະ ຊ້າ, ໄວ.
3. ຄູສາທິດການເຮັດທ່າທາງຕາມຂໍ້ຕົກລົງ: ເຄາະ 1 ບາດ ເຮັດທ່າທາງອູ້ມນ້ອງ, ເຄາະ 2 ບາດ ເຮັດທ່າທາງຫວ່ານເຂົ້າໃຫ້ໄກ່.
4 ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກຍົກມືຂຶ້ນແກວ່ງໄປ, ມາ ຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກໃຫ້ມີ ຄວາມປອດໄພໃນເວລາເຮັດທ່າທາງຕາມຂໍ້ຕົກລົງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການປະຕິບັດຕາມຂໍ້ຕົກລົງ.
2. ຄວາມເບີກບານຂອງເດັກ.

# ກິດຈະກໍາວົງມົນ

## ຫົວຂໍ້: ຫ້ອງຕ່າງໆໃນເຮືອນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຮ້ອງເພງ ເຮືອນຂອງຫຼານ ປະກອບທ່າທາງ.
2. ບອກຊື່ຫ້ອງຕ່າງໆໃນເຮືອນ

### II. ເນື້ອໃນຕົ້ນຕໍ

1. ການຮ້ອງເພງ ເຮືອນຂອງຫຼານ ປະກອບທ່າທາງ.
2. ຫ້ອງຕ່າງໆໃນເຮືອນ: ຫ້ອງນອນ, ຫ້ອງຮັບແຂກ, ຫ້ອງນໍ້າ ແລະ ຫ້ອງຄົວ.

### III. ສື່ການຮຽນ-ການສອນ

1. ບົດເພງ ເຮືອນຂອງຫຼານ (ປື້ມຄູ່ມືຄູ).
2. ຮູບພາບ: ຫ້ອງນອນ, ຫ້ອງຮັບແຂກ, ຫ້ອງນໍ້າ ແລະ ຫ້ອງຄົວ.

### IV. ກິດຈະກໍາການຮຽນ-ການສອນ

1. ຄູ ສົນທະນາກັບເດັກ ກ່ຽວກັບຫ້ອງຕ່າງໆ ຢູ່ເຮືອນຂອງເດັກ.
2. ໃຫ້ເດັກຮ້ອງເພງ ເຮືອນຂອງຫຼານ ປະກອບທ່າທາງ ແລະ ຄູສົນທະນາກັບເດັກກ່ຽວກັບເນື້ອໃນເພງ.
3. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກກ່ຽວກັບຊື່ຫ້ອງຕ່າງໆໃນເຮືອນ.
4. ໃຫ້ເດັກບອກຊື່ ຫ້ອງຕ່າງໆໃນເຮືອນ.
5. ໃຫ້ເດັກເວົ້າຄືນກ່ຽວກັບການບອກຊື່ຫ້ອງຕ່າງໆໃນເຮືອນ ແລະ ຮ້ອງເພງ.
6. ສຶກສາອົບຮົມເດັກກ່ຽວກັບການປັດກວາດເຮືອນ, ເຊັດ, ຖູຫ້ອງຕ່າງໆຊ່ວຍອ້າຍ ແລະ ເອື້ອຍ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຮ້ອງເພງ ເຮືອນຂອງຫຼານ ປະກອບທ່າທາງ.
2. ການບອກຊື່ຫ້ອງຕ່າງໆ ໃນເຮືອນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຕັດເຈ້ຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕັດເຈ້ຍຕາມຮອຍຈ້ຳເປັນເສັ້ນຊື່ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຕັດເຈ້ຍຕາມຮອຍຈ້ຳເປັນເສັ້ນຊື່.

### III. ສື່ການຮຽນ-ການສອນ

ເຈ້ຍ, ມີດຕັດນ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຕັດເຈ້ຍດ້ວຍມືເປົ່າຢູ່ກາງຫາວ.
2. ຄູແນະນຳ, ສາທິດວິທີຕັດເຈ້ຍເປັນເສັ້ນຊື່ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມ ຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການລໍຄອຍ, ການແບ່ງປັນ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມເອົາໃຈໃສ່ໃນການຕັດເຈ້ຍຕາມຮອຍຈ້ຳເປັນເສັ້ນຊື່.
2. ຄວາມສາມັກຄີ ແລະ ຄວາມປອດໄພໃນການຕັດເຈ້ຍ.
3. ຄວາມຖືກຕ້ອງຂອງການຕັດເຈ້ຍ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ນ້ຳຂຶ້ນ, ນ້ຳລົງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ ນ້ຳຂຶ້ນ, ນ້ຳລົງ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ນ້ຳຂຶ້ນ, ນ້ຳລົງ.

### III. ສື່ການຮຽນ-ການສອນ

1. ສໍຂາວ, ເຄື່ອງເຄາະຈັງຫວະ.
2. ວິທີຫຼິ້ນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກແລ່ນຕາມຈັງຫວະບາດເຄາະຊ້າໆ.
2. ຄູແນະນຳ ແລະ ສາທິດ ກ່ຽວກັບການຫຼິ້ນແບບຫຼິ້ນ ນ້ຳຂຶ້ນ, ນ້ຳລົງ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບ ການຫຼິ້ນແບບຫຼິ້ນ ນ້ຳຂຶ້ນ, ນ້ຳລົງ.
5. ສຶກສາອົບຮົມເດັກກ່ຽວກັບ ການຫຼິ້ນແບບຫຼິ້ນ ນ້ຳຂຶ້ນ, ນ້ຳລົງ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນປະດິດສ້າງ ນ້ຳຂຶ້ນ, ນ້ຳລົງ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບທີ່ຄືກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ນຳຮູບພາບທີ່ຄືກັນມາຈັບຄູ່ກັນຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຮູບພາບທີ່ຄືກັນ: ຫ້ອງນອນ, ຫ້ອງຮັບແຂກ, ຫ້ອງນ້ຳ ແລະ ຫ້ອງຄົວ.

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຮູບພາບທີ່ຄືກັນ: ຫ້ອງນອນ, ຫ້ອງຮັບແຂກ, ຫ້ອງນ້ຳ ແລະ ຫ້ອງຄົວ.
2. ບົດເພງ ເຮືອນຂອງຫຼານ.
3. ເກມເກົ່າ ເກມຕໍ່ຮູບພາບ ແມ່ອູ້ມລູກ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ເຮືອນຂອງຫຼານ.
2. ຄູສະເໜີຊື່ເກມ.
3. ຄູສາທິດການຫຼິ້ນເກມ ຈັບຄູ່ຮູບພາບທີ່ຄືກັນ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການລໍຄອຍ, ການແບ່ງປັນ ແລະ ເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຈັບຄູ່ຮູບພາບທີ່ຄືກັນ.
2. ການມີສ່ວນຮ່ວມຂອງເດັກແຕ່ລະຄົນ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເກມການສຶກສາຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມບົດບາດສົມມຸດ ແຕ່ງກິນ, ລ້າງຖ້ວຍ, ລ້າງບ່ວງ, ລ້າງໝໍ້.
2. ການຫຼິ້ນໃນມຸມເກມການສຶກສາ ເກມຈັບຄູ່ຮູບພາບທີ່ຄືກັນ: ຫ້ອງນອນ, ຫ້ອງຮັບແຂກ, ຫ້ອງນໍ້າ ແລະ ຫ້ອງຄົວ.

### III. ສື່ການຮຽນ-ການສອນ

1. ໝໍ້, ຖ້ວຍ, ບ່ວງ, ຊາມນໍ້າ ແລະ ຈອງ.
2. ເກມຈັບຄູ່ຮູບພາບທີ່ຄືກັນ: ຫ້ອງນອນ,ຫ້ອງຮັບແຂກ, ຫ້ອງນໍ້າ ແລະ ຫ້ອງຄົວ.
3. ບົດຄຳຄ່ອງ ເຮືອນຫຼັງໜຶ່ງ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ເຮືອນຫຼັງໜຶ່ງ.
2. ຄູແນະນຳວິທີຫຼິ້ນຕາມມຸມບົດບາດສົມມຸດ, ມຸມເກມການສຶກສາ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການລໍຄອຍ, ການແບ່ງປັນ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ເຮັດທ່າທາງ ຜູ້ເຖົ້າຍ່າງ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານຄໍ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຄໍ.
2. ໃຫ້ເດັກຍ່າງເປັນສອງແຖວຊື່ຕາມບໍລິເວນຫ້ອງຮຽນ.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ຜູ້ເຖົ້າຍ່າງ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງ, ຢຽດຂາຊື່.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາເຮັດທ່າທາງປະກອບການເລົ່າ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ເຄື່ອງໃຊ້ໃນຫ້ອງນອນ ແລະ ການບົວລະບັດຮັກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ເລົ່າຄຳຄ່ອງ ຫ້ອງນອນຂອງຂ້ອຍ ປະກອບທ່າທາງ.
1. ບອກຊື່ເຄື່ອງໃຊ້ໃນຫ້ອງນອນ ແລະ ການບົວລະບັດຮັກສາ.
2. ເວົ້າເປັນຄຳຕາມຮູບພາບ ໝອນ.

### II. ເນື້ອໃນຕົ້ນຕໍ

1. ການເລົ່າຄຳຄ່ອງ ຫ້ອງນອນຂອງຂ້ອຍ.
2. ຊື່ເຄື່ອງໃຊ້ໃນຫ້ອງນອນ: ຕຽງ. ຕູ້, ໝອນ, ຜ້າຫົ່ມ, ຜ້າປູບ່ອນ, ມຸ້ງ ແລະ ການບົວລະບັດຮັກສາ ປັດຂີ້ຝຸ່ນ ແລະ ຊັກເຄື່ອງ.
3. ການເວົ້າເປັນຄຳຕາມຮູບພາບ ໝອນ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ຫ້ອງນອນຂອງຂ້ອຍ (ປື້ມຄູ່ມືຄູ).
2. ຮູບພາບ: ຕຽງ, ຕູ້, ໝອນ, ມຸ້ງ ແລະ ຜ້າຫົ່ມ.
3. ຮູບພາບ ໝອນ.

### IV. ກິດຈະກຳການຮຽນ-ການສອນ

1. ຄູ ສົນທະນາກັບເດັກ ກ່ຽວກັບເຄື່ອງໃຊ້ໃນຫ້ອງນອນທີ່ເດັກເຄີຍເຫັນ.
2. ໃຫ້ເດັກເລົ່າຄຳຄ່ອງ ຫ້ອງນອນຂອງຂ້ອຍ ປະກອບທ່າທາງ ແລະ ຄູສົນທະນາກັບເດັກ ກ່ຽວກັບເນື້ອໃນຄຳຄ່ອງ.
3. ໃຫ້ເດັກສັງເກດຮູບພາບ, ຄູສົນທະນາກັບເດັກ ກ່ຽວກັບຊື່ເຄື່ອງໃຊ້ໃນຫ້ອງນອນ, ການບົວລະບັດ ຮັກສາ ແລະ ເດັກບອກຊື່ເຄື່ອງໃຊ້ໃນຫ້ອງນອນ.
4. ໃຫ້ເດັກເວົ້າເປັນຄຳຕາມຮູບພາບ: ໝອນ.
5. ໃຫ້ເດັກເວົ້າຄືນກ່ຽວກັບ ການບອກຊື່ເຄື່ອງໃຊ້ໃນຫ້ອງນອນ, ການບົວລະບັດຮັກສາ, ການເວົ້າເປັນຄຳຕາມຮູບພາບ ແລະ ເລົ່າຄຳຄ່ອງ.
6. ສຶກສາອົບຮົມເດັກກ່ຽວກັບ ການພັບເຄື່ອງນອນຫຼັງຈາກຕື່ນນອນ ແລະ ມ້ຽນເປັນລະບຽບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການເລົ່າຄຳຄ່ອງ ຫ້ອງນອນຂອງຂ້ອຍ ປະກອບທ່າທາງ.
2. ການບອກຊື່ເຄື່ອງໃຊ້ໃນຫ້ອງນອນ ແລະ ການບົວລະບັດຮັກສາ.
3. ການເວົ້າເປັນຄຳຕາມຮູບພາບ: ໝອນ.

# ກິດຈະກໍາສິລະປະສ້າງສັນ

## ຫົວຂໍ້: ຂີດເສັ້ນຊື່

**I. ຈຸດປະສົງ**

ເພື່ອໃຫ້ເດັກສາມາດ ຂີດເສັ້ນຊື່ ແຕ່ເທິງລົງລຸ່ມຕາມຮອຍຈໍ້າຖືກຕ້ອງ.

**II. ເນື້ອໃນຕົ້ນຕໍ**

ການຂີດເສັ້ນຊື່ ແຕ່ເທິງລົງລຸ່ມຕາມຮອຍຈໍ້າ.

**III. ສື່ການຮຽນ-ການສອນ**

1. ສໍດໍາ.
2. ປຶ້ມບົດເຝິກຫັດພາສາລາວເຫຼັ້ມ 1 ຫຼື ເຈ້ຍແບບຂີດເສັ້ນຊື່ແຕ່ເທິງ ລົງລຸ່ມຕາມ ຮອຍຈໍ້າ.

**IV. ກິດຈະກໍາການຮຽນ-ການສອນ**

1. ໃຫ້ເດັກເຮັດທ່າທາງ ຂີດເສັ້ນຊື່ກາງຫາວ.
2. ຄູ ແນະນໍາ, ສາທິດວິທີຂີດເສັ້ນຊື່ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນໍາສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການລໍຄອຍ, ການແບ່ງປັນ ແລະ ການເກັບມ້ຽນອຸປະກອນ.

**V. ການວັດ ແລະ ປະເມີນຜົນ**

ສັງເກດ:

1. ຄວາມຖືກຕ້ອງໃນການຂີດເສັ້ນຊື່ ແຕ່ເທິງລົງລຸ່ມຕາມຮອຍຈໍ້າ.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້:  ແບບຫຼິ້ນ ເກັບເຄື່ອງໃຊ້ໃນເຮືອນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ ເກັບເຄື່ອງໃຊ້ໃນເຮືອນ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ເກັບເຄື່ອງໃຊ້ໃນເຮືອນ.

### II. ສື່ການຮຽນ-ການສອນ

1. ຈອກ, ຈານ, ຖ້ວຍ ແລະ ບ່ວງ.
2. ວິທີຫຼິ້ນ (ປື້ມຄູ່ມືຄູ).

### III. ກິດຈະກຳການ-ຮຽນການສອນ

1. ໃຫ້ເດັກຍ່າງຕາມສຽງຕົບມືຊ້າ, ໄວ.
2. ຄູແນະນຳ ແລະ ສາທິດກ່ຽວກັບ ການຫຼິ້ນແບບຫຼິ້ນ ເກັບເຄື່ອງໃຊ້ໃນເຮືອນ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບ ການຫຼິ້ນແບບຫຼິ້ນ ເກັບເຄື່ອງໃຊ້ໃນເຮືອນ.
5. ສຶກສາອົບຮົມເດັກກ່ຽວກັບ ການຫຼິ້ນແບບຫຼິ້ນ ເກັບເຄື່ອງໃຊ້ໃນເຮືອນ ຢ່າງປອດໄພ.

### IV. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນປະດິດສ້າງ ເກັບເຄື່ອງໃຊ້ໃນເຮືອນ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບທີ່ຄືກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ນຳຮູບພາບທີ່ຄືກັນມາຈັບຄູ່ກັນຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຮູບພາບທີ່ຄືກັນ: ຕູ້, ຕຽງ ແລະ ໝອນ.

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຮູບພາບທີ່ຄືກັນ: ຕູ້, ຕຽງ ແລະ ໝອນ.
2. ບົດຄຳຄ່ອງ ຫ້ອງນອນຂອງຂ້ອຍ.
3. ເກມເກົ່າ ເກມຈັບຄູ່ຮູບພາບທີ່ຄືກັນ: ຫ້ອງນອນ, ຫ້ອງຮັບແຂກ, ຫ້ອງນ້ຳ ແລະ ຫ້ອງຄົວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ຫ້ອງນອນຂອງຂ້ອຍ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນ ເກມຈັບຄູ່ຮູບພາບທີ່ຄືກັນ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການລໍຄອຍ, ການແບ່ງປັນ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງ ການຈັບຄູ່ຮູບພາບທີ່ຄືກັນ.
2. ການມີສ່ວນຮ່ວມຂອງເດັກ ແຕ່ລະຄົນ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເກມການສຶກສາ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເກມການສຶກສາຖືກຕ້ອງ ແລະ ມ່ວນຊື່ນ.
2. ຫຼິ້ນໃນມຸມສິລະປະສ້າງສັນຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເກມການສຶກສາ ເກມຈັບຄູ່ຮູບພາບທີ່ຄືກັນ: ຕູ້, ຕຽງ, ໝອນ ແລະ ຜ້າຫົ່ມ.
2. ການຫຼິ້ນໃນມຸມສິລະປະສ້າງສັນ ຂີດເສັ້ນຊື່ ແຕ່ເທິງລົງລຸ່ມຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຮູບພາບທີ່ຄືກັນ: ຕູ້, ຕຽງ, ໝອນ ແລະ ຜ້າຫົ່ມ.
2. ສໍດຳ ແລະ ປຶ້ມບົດເຝິກຫັດພາສາລາວ ເຫຼັ້ມ 1 ຫຼື ເຈ້ຍແບບຂີດເສັ້ນຊື່ ແຕ່ເທິງລົງລຸ່ມຕາມຮອຍຈ້ຳ.
3. ບົດຄຳຄ່ອງ ຫ້ອງນອນຂອງຂ້ອຍ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ຫ້ອງນອນຂອງຂ້ອຍ.
2. ຄູແນະນຳວິທີຫຼິ້ນຕາມມຸມເກມການສຶກສາ, ມຸມສິລະປະສ້າງສັນ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການລໍຄອຍ, ການແບ່ງປັນ  ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເກມການສຶກສາຖືກຕ້ອງ ແລະ ມ່ວນຊື່ນ.
2. ການຫຼິ້ນໃນມຸມສິລະປະສ້າງສັນ ຖືກຕ້ອງ ແລະ ມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຄອບຄົວຂອງຂ້ອຍ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດຄຳຄ່ອງ ຄອບຄົວຂອງຂ້ອຍ.
3. ການບໍລິຫານຂ້າງ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກ ບໍລິຫານຂ້າງ.
2. ໃຫ້ເດັກຍ່າງເປັນວົງມົນແກ່ວງແຂນໄປຕາມບາດເຄາະ ຊ້າ, ໄວ.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຄອບຄົວຂອງຂ້ອຍ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງດົມດອກໄມ້.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກໃຫ້ມີ ຄວາມປອດໄພໃນເວລາເຮັດທ່າທາງຕາມຈິນຕະນາການປະກອບການເລົ່າຄຳຄ່ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ເຄື່ອງໃຊ້ໃນຫ້ອງຮັບແຂກ ແລະ ການບົວລະບັດຮັກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເຄື່ອງໃຊ້ໃນຫ້ອງຮັບແຂກ ແລະ ການບົວລະບັດຮັກສາ.
2. ປຽບທຽບຮູບພາບ: ໂຕະ ສັ້ນ, ຍາວ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງໃຊ້ໃນຫ້ອງຮັບແຂກ: ໂຊຟາ, ໂຕະ, ຕັ່ງ, ຕູ້ໂຊ, ເຕົ້າດອກໄມ້, ໂທລະພາບ ແລະ ການບົວລະບັດຮັກສາ: ເຊັດຖູ, ບັດຂີ້ຝຸ່ນ.
2. ການປຽບທຽບຮູບພາບ: ໂຕະ ສັ້ນ, ຍາວ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ໂຊຟາ (ຊາລົງ), ໂຕະ, ຕັ່ງ, ຕູ້ໂຊ, ເຕົ້າດອກໄມ້ ແລະ ໂທລະພາບ.
2. ຮູບພາບ: ພໍ່ ແມ່ ແລະ ລູກກຳລັງອະນາໄມຫ້ອງຮັບແຂກ.
3. ຮູບພາບໂຕະ ສັ້ນ ແລະ ຍາວ.
4. ບົດຄຳຄ່ອງ ຫ້ອງນອນຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ຫ້ອງນອນຂອງຂ້ອຍ ປະກອບທ່າທາງ.
2. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກກ່ຽວກັບຊື່ເຄື່ອງໃຊ້ໃນຫ້ອງຮັບແຂກ ແລະ ການບົວລະ ບັດຮັກສາ.
3. ໃຫ້ເດັກບອກຊື່ເຄື່ອງໃຊ້ໃນຫ້ອງຮັບແຂກ ແລະ ການບົວລະບັດຮັກສາ.
4. ໃຫ້ເດັກປຽບທຽບຮູບພາບ: ໂຕະສັ້ນ, ຍາວ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເຄື່ອງໃຊ້, ການບົວລະບັດຮັກສາ ແລະ ການປຽບທຽບ ສັ້ນ-ຍາວ.
6. ສຶກສາອົບຮົມເດັກກ່ຽວກັບການເຊັດໂຕະ, ເຊັດຕັ່ງ ແລະ ປັດກວາດຂີ້ຝຸ່ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກຊື່ເຄື່ອງໃຊ້ໃນຫ້ອງຮັບແຂກ ແລະ ການບົວລະບັດຮັກສາ.
2. ການປຽບທຽບຮູບພາບ: ໂຕະ ສັ້ນ, ຍາວ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ປັ້ນດິນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ປັ້ນດິນເປັນໝ່ວຍມົນຕາມຈຳນວນ 3.

### II. ເນື້ອໃນຕົ້ນຕໍ

ການ ປັ້ນເປັນໝ່ວຍມົນ ຈຳນວນ 3 ໝ່ວຍ.

### III. ສື່ການຮຽນ-ການສອນ

ດິນປັ້ນ, ຜ້າຢາງ ຫຼື ເຈ້ຍຮອງ, ຊາມນ້ຳ ແລະ ຜ້າເຊັດມື.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກດີດນິ້ວມືຊ້າຍ ແລະ ຂວາ.
2. ຄູ ແນະນຳ, ສາທິດວິທີປັ້ນດິນເປັນໝ່ວຍມົນຕາມຈຳນວນ 3 ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການອະນາໄມມື ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມເອົາໃຈໃສ່ຂອງເດັກ.
2. ຄວາມສາມັກຄີກັບໝູ່ເພື່ອນ.
3. ຄວາມຄ້າຍຄືຂອງຮູບປັ້ນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ເຄື່ອງຫຼິ້ນໃນເດີ່ນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນເຄື່ອງຫຼິ້ນໃນເດີ່ນຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເຄື່ອງຫຼິ້ນ: ຫຼິ້ນລອດບ້ວງ ແລະ ໂອ້ນຊາ ຫຼື ເຄື່ອງຫຼິ້ນທີ່ມີໃນທ້ອງຖິ່ນ.

### III. ສື່ການຮຽນ-ການສອນ

1. ບ້ວງ ແລະ ໂອ້ນຊາ ຫຼື ເຄື່ອງຫຼິ້ນທີ່ມີໃນທ້ອງຖິ່ນ.
2. ບົດເພງ ຄອບຄົວຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຄອບຄົວຂອງຂ້ອຍ
2. ຄູແນະນຳ ການຫຼິ້ນລອດບ້ວງ ແລະ ໂອ້ນຊາ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນລອດບ້ວງ ແລະ ໂອ້ນຊາ.
5. ສຶກສາອົບຮົມເດັກກ່ຽວກັບການຫຼິ້ນລອດບ້ວງ ແລະ ໂອ້ນຊາຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ລຽນລຳດັບຮູບພາບແຕ່ນ້ອຍ ຫາໃຫຍ່ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມລຽນລຳດັບຮູບພາບ ຕຽງແຕ່ນ້ອຍ ຫາໃຫ່ຍ.

### III. ສື່ການຮຽນ-ການສອນ

1. ເກມລຽນລຳດັບຮູບພາບ ຕຽງແຕ່ນ້ອຍຫາໃຫ່ຍ.
2. ເກມເກົ່າ ເກມຈັບຄູ່ຮູບພາບທີ່ຄືກັນ: ຕຽງ, ຕູ້ ແລະ ໝອນ.
3. ບົດຄຳຄ່ອງ ຫ້ອງນອນຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ຫ້ອງນອນຂອງຂ້ອຍ.
2. ຄູສະເໜີຊື່ເກມ.
3. ຄູສາທິດການຫຼິ້ນລຽນລຳດັບຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການລໍຖ້າ, ການແບ່ງປັນ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການລຽນລຳດັບຮູບພາບ ແຕ່ນ້ອຍ ຫາ ໃຫຍ່.
2. ຄວາມພະຍາຍາມຂອງເດັກ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມສິລະປະສ້າງສັນຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມອ່ານ ສັງເກດ, ອ່ານຮູບພາບ ໂຊຟາ (ຊາລົງ), ໂຕະ, ຕັ່ງ, ຕູ້ໂຊ, ໂທລະພາບ ແລະ ປື້ມເລື່ອງປະກອບຮູບພາບ.
2. ການຫຼິ້ນໃນມຸມສິລະປະສ້າງສັນ ປັ້ນດິນເປັນໜ່ວຍມົນຈຳນວນ 3 ໜ່ວຍ.

### III. ສື່ການຮຽນ-ການສອນ

1. ຮູບພາບ ໂຊຟາ, ໂຕະ, ຕັ່ງ, ຕູ້ໂຊ, ໂທລະພາບ, ປື້ມເລື່ອງ ແລະ ປື້ມນິທານ.
2. ດິນປັ້ນ, ຜ້າຢາງ ຫຼື ເຈ້ຍຮອງ.
3. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກຄືນກ່ຽວກັບ ມຸມທີ່ເຄີຍຫຼິ້ນຜ່ານມາ.
2. ຄູແນະນຳວິທີຫຼິ້ນຕາມມຸມອ່ານ, ມຸມສິລະປະສ້າງສັນ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການລໍຄອຍ, ການແບ່ງປັນ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າຢ່າງມ່ວນຊື່ນ.

## II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ອາບນໍ້າ ແລະ ສະຜົມ

## III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານຂາ (ປື້ມຄູ່ມືຄູ).

## IV. ກິດຈະກຳການ-ຮຽນການສອນ

1. ໃຫ້ເດັກບໍລິຫານຂາ.
2. ໃຫ້ເດັກຍ່າງໃນບໍລິເວນຫ້ອງຕາມບາດເຄາະຊ້າ, ໄວ.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ອາບນໍ້າ ແລະ ສະຜົມ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງຮ້ອຍດອກໄມ້.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ເຄື່ອງໃຊ້ໃນຫ້ອງນ້ຳ ແລະ ການບົວລະບັດຮັກສາ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເຄື່ອງໃຊ້ໃນຫ້ອງນ້ຳ ແລະ ການບົວລະບັດຮັກສາ.
2. ເວົ້າເປັນຄຳຕາມຮູບພາບ ສະບູ ແລະ ໂອ.

## II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງໃຊ້ ແລະ ການບົວລະບັດຮັກສາຫ້ອງນ້ຳ.
2. ການເວົ້າເປັນຄຳຕາມຮູບພາບ: ສະບູ ແລະ ໂອ.

## III. ສື່ການຮຽນ-ການສອນ

1. ຮູບພາບເຄື່ອງໃຊ້ໃນຫ້ອງນ້ຳ: ໄຫນ້ຳ, ໂອ, ຟອຍຖູຫ້ອງນ້ຳ, ນ້ຳຢາລ້າງຫ້ອງນ້ຳ, ສະບູ, ແຟັບ ແລະ ຜ້າເຊັດມື.
2. ຮູບພາບ ສະບູ ແລະ ໂອ.
3. ບົດເພງ ເຮືອນຂອງຫຼານ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ເຮືອນຂອງຫຼານ ປະກອບທ່າທາງ.
2. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກກ່ຽວກັບ ຊື່ເຄື່ອງໃຊ້ໃນຫ້ອງນ້ຳ ແລະ ການ ບົວລະບັດຮັກສາ.
3. ໃຫ້ເດັກບອກຊື່ເຄື່ອງໃຊ້ໃນຫ້ອງນ້ຳ ແລະ ການບົວລະບັດຮັກສາ.
4. ໃຫ້ເດັກເວົ້າເປັນຄຳຕາມຮູບພາບ ສະບູ ແລະ ໂອ.
5. ໃຫ້ເດັກເວົ້າຄືນການບອກຊື່ເຄື່ອງໃຊ້, ການບົວລະບັດຮັກສາຫ້ອງນ້ຳ ແລະ ການເວົ້າເປັນຄຳ ຕາມຮູບພາບ.
6. ສຶກສາອົບຮົມເດັກກ່ຽວກັບ ການໃຊ້ຫ້ອງນ້ຳທຸກຄັ້ງຕ້ອງລ້າງໃຫ້ສະອາດ ແລະ ເກັບມ້ຽນ ເຄື່ອງໃຊ້ຖືກບ່ອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກຊື່ ແລະ ການບົວລະບັດຮັກສາເຄື່ອງໃຊ້ໃນຫ້ອງນ້ຳ.
2. ການເວົ້າເປັນຄຳຕາມຮູບພາບ ສະບູ ແລະ ໂອ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້:  ຂີດເສັ້ນຊື່

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂີດເສັ້ນຊື່ ແຕ່ເທິງລົງລຸ່ມຕາມຮອຍຈໍ້າຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການຂີດເສັ້ນຊື່ ແຕ່ເທິງລົງລຸ່ມຕາມຮອຍຈໍ້າ.

## III. ສື່ການຮຽນ-ການສອນ

1. ສໍດໍາ.
2. ປຶ້ມບົດເຝິກຫັດພາສາລາວ ເຫຼັ້ມທີ  1 ຫຼື ເຈ້ຍແບບຂີດເສັ້ນຊື່ແຕ່ເທິງລົງລຸ່ມ ຕາມຮອຍຈໍ້າ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງກຳມື ແລະ ແບມື.
2. ຄູແນະນຳ, ການຂີດເສັ້ນຊື່ ແຕ່ເທິງລົງລຸ່ມ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການລໍຄອຍ, ການແບ່ງປັນ ແລະ ການເກັບມ້ຽນອຸປະກອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຂີດເສັ້ນຊື່ ແຕ່ເທິງລົງລຸ່ມຕາມຮອຍຈໍ້າ.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້:  ແບບຫຼິ້ນ ຣ່າຍນ້ຳໃສ່ແກ້ວ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ ຣ່າຍນ້ຳໃສ່ແກ້ວ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ຣ່າຍນ້ຳໃສ່ແກ້ວ.

### III. ສື່ການຮຽນ-ການສອນ

1. ຈອກ, ຄຸນ້ຳ ແລະ ແກ້ວ ຫຼື ກະຕຸກຢາງ.
2. ວິທີຫຼິ້ນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເບັດແອວໄປ ເບື້ອງຊ້າຍ, ເບື້ອງຂວາ.
2. ຄູ ແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ຣ່າຍນ້ຳໃສ່ແກ້ວ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນການຫຼິ້ນແບບຫຼິ້ນ ຣ່າຍນ້ຳໃສ່ແກ້ວ.
5. ສຶກສາອົບຮົມເດັກກ່ຽວກັບ ການຫຼິ້ນແບບຫຼິ້ນ ຣ່າຍນ້ຳໃສ່ແກ້ວ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນປະດິດສ້າງ ຣ່າຍນ້ຳໃສ່ແກ້ວ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ເດັກນ້ອຍອະນາໄມຫ້ອງນ້ຳ .

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ເດັກນ້ອຍອະນາໄມຫ້ອງນ້ຳ.
2. ບົດເພງ ເຮືອນຂອງຫຼານ.
3. ເກມເກົ່າ ເກມລຽນລຳດັບຮູບພາບ ຕຽງແຕ່ນ້ອຍ ຫາ ໃຫຍ່.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ເຮືອນຂອງຫຼານ.
2. ຄູສະເໜີຊື່ເກມ.
3. ຄູ ສາທິດວິທີຫຼິ້ນເກມ ຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການລໍຄອຍ, ການແບ່ງປັນ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຕໍ່ຮູບພາບຕາມແບບ.
2. ການມີສ່ວນຮ່ວມຂອງເດັກແຕ່ລະຄົນ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເກມການສຶກສາຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດເຄື່ອງດົນຕີ: ຕີກອງ, ສັ່ນໝາກກະແຊັກ, ຈັບໄມໂຄຼໂຟນ ຮ້ອງເພງ.
2. ການຫຼິ້ນໃນມຸມເກມການສຶກສາ: ເກມຕໍ່ຮູບພາບ ເດັກນ້ອຍອະນາໄມຫ້ອງນ້ຳ.

### III. ສື່ການຮຽນ-ການສອນ

1. ກອງ, ໝາກກະແຊັກ, ໄມໂຄຼໂຟນ.
2. ເກມຕໍ່ຮູບພາບ ເດັກນ້ອຍອະນາໄມຫ້ອງນ້ຳ.
3. ບັດເຂົ້າມຸມຫຼິ້ນ.
4. ບົດເພງ ຄອບຄົວຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຄອບຄົວຂອງຂ້ອຍ.
2. ຄູແນະນຳວິທີຫຼິ້ນຕາມມຸມ ເຄື່ອງຫຼິ້ນສຳຜັດ, ມຸມເກມການສຶກສາ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການລໍຄອຍ, ການແບ່ງປັນ ແລະ ການເກັບມ້ຽນ ເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນເກມມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເກມການສຶກສາຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈິນຕະນາການປະກອບການເນື້ອໃນຄຳຄ່ອງຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ເຮືອນຫຼັງໜຶ່ງ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດຄຳຄ່ອງ ເຮືອນຫຼັງໜຶ່ງ.
3. ການບໍລິຫານຂ້າງ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຂ້າງ.
2. ໃຫ້ເດັກຍ່າງເປັນວົງມົນແກ່ວງແຂນໄປຕາມສຽງເຄາະຊ້າ,ໄວ.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ເຮືອນຫຼັງໜຶ່ງ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງຫາຍໃຈເຂົ້າ, ອອກຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ເຄື່ອງໃຊ້ໃນຫ້ອງຄົວ ແລະ ການບົວລະບັດຮັກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເຄື່ອງໃຊ້ໃນຫ້ອງຄົວ ແລະ ການບົວລະບັດຮັກສາ.
2. ເວົ້າເປັນຄຳຕາມຮູບພາບ ຖ້ວຍ ແລະ ບ່ວງ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງໃຊ້ໃນຫ້ອງຄົວ: ຖ້ວຍ, ບ່ວງ, ໝໍ້ ແລະ ເຕົາໄຟ.
- ການບົວລະບັດຮັກສາ: ລ້າງ, ເຊັດໃຫ້ສະອາດ ແລະ ມ້ຽນໃຫ້ຖືກບ່ອນ .
2. ການເວົ້າເປັນຄຳຕາມຮູບພາບ ຖ້ວຍ ແລະ ບ່ວງ.

### III. ສື່ການຮຽນ-ການສອນ

1. ວັດຖຸຈິງ ຫຼື ຮູບພາບຖ້ວຍ, ບ່ວງ, ໝໍ້ ແລະ ເຕົາໄຟ.
2. ຮູບພາບ ຖ້ວຍ ແລະ ບ່ວງ.
3. ບົດຄຳຄ່ອງ ຫ້ອງນອນຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ຫ້ອງນອນຂອງຂ້ອຍ ປະກອບທ່າທາງ.
2. ໃຫ້ເດັກສັງເກດຮູບ ຫຼື ວັດຖຸຈິງ ແລະ ຄູສົນທະນາກັບເດັກກ່ຽວກັບຊື່ເຄື່ອງໃຊ້ໃນຫ້ອງຄົວ ແລະ ການບົວລະບັດຮັກສາ.
3. ໃຫ້ເດັກບອກຊື່ເຄື່ອງໃຊ້ໃນຫ້ອງຄົວ ແລະ ການບົວລະບັດຮັກສາ.
4. ໃຫ້ເດັກເວົ້າເປັນຄຳຕາມຮູບ: ຖ້ວຍ ແລະ ບ່ວງ.
5. ໃຫ້ເດັກເວົ້າຄືນການບອກຊື່ເຄື່ອງໃຊ້ໃນຫ້ອງຄົວ, ການບົວລະບັດຮັກສາ ແລະ ເວົ້າເປັນຄຳຕາມຮູບພາບ.
6. ສຶກສາອົບຮົມເດັກກ່ຽວກັບ ການລ້າງຖ້ວຍ, ເຊັດຖ້ວຍຊ່ວຍແມ່ , ເອື້ອຍ ແລະ ເກັບມ້ຽນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກຊື່ເຄື່ອງໃຊ້ໃນຫ້ອງຄົວ ແລະ ການບົວລະບັດຮັກສາ.
2. ການເວົ້າເປັນຄຳຕາມຮູບພາບ ຖ້ວຍ ແລະ ບ່ວງ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຕິດເຈ້ຍ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕິດເຈ້ຍຮູບວົງມົນ 3 ວົງຕິດກັນຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການຕິດເຈ້ຍຮູບວົງມົນ 3 ວົງ ຕິດກັນ.

## III. ສື່ການຮຽນ-ການສອນ

ຮູບວົງມົນ, ກາວ, ໄມ້ທາກາວ ຫຼື ກາວເຂົ້າໜຽວຕົ້ມ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກສັ່ນຄໍ່ມື ແລະ ດີດນິ້ວມື.
2. ຄູແນະນຳ, ສາທິດວິທີ ຕິດຮູບວົງມົນ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການອະນາໄມ ແລະ ການເກັບມ້ຽນອຸປະກອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມເອົາໃຈໃສ່ການຕິດເຈ້ຍຮູບວົງມົນ 3 ໜ່ວຍຕິດກັນ.
2. ຄວາມສາມັກຄີ ແລະ ຄວາມປອດໄພໃນເວລາເຮັດວຽກ.
3. ຄວາມຖືກຕ້ອງຂອງການຕິດເຈ້ຍ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ເຊື່ອງຜ້າ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ.

### III. ສື່ການຮຽນ-ການສອນ

1. ຜ້າແພມົນ.
2. ວິທີຫຼິ້ນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຍ່າງ ແລະ ແລ່ນຊ້າໆ.
2. ຄູສາທິດ ແລະ ແນະນຳວິທີຫຼິ້ນແບບຫຼິ້ນ ເຊື່ອງຜ້າ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບ ເຊື່ອງຜ້າ.
5. ສຶກສາອົບຮົມເດັກໃຫ້ມີ ການຫຼິ້ນແບບຫຼິ້ນ ເຊື່ອງຜ້າ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ລຽນລຳດັບຮູບພາບ ໝໍ້ ແຕ່ນ້ອຍ ຫາ ໃຫຍ່ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມລຽນລຳດັບຮູບພາບ ໝໍ້ ແຕ່ນ້ອຍ ຫາ ໃຫຍ່.

### III. ສື່ການຮຽນ-ການສອນ

1. ເກມລຽນລຳດັບຮູບພາບໝໍ້ ແຕ່ນ້ອຍ ຫາ ໃຫຍ່.
2. ບົດຄຳຄ່ອງ ຫ້ອງນອນຂອງຂ້ອຍ.
3. ເກມເກົ່າ ເກມຕໍ່ຮູບພາບ ເດັກນ້ອຍອະນາໄມຫ້ອງນ້ຳ.

### IV . ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ຫ້ອງນອນຂອງຂ້ອຍ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມລຽນລຳດັບຮູບພາບ ແຕ່ນ້ອຍ ຫາ ໃຫຍ່ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່ ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການລໍຄອຍ, ການແບ່ງປັນ  ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການລຽນລຳດັບຮູບພາບ ໝໍ້ແຕ່ນ້ອຍ ຫາ ໃຫຍ່.
2. ຄວາມພະຍາຍາມຂອງເດັກ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເກມການສຶກສາຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມບົດບາດສົມມຸດ: ເປັນພໍ່, ແມ່ ແລະ ລູກ (ຫຼິ້ນເຮືອນນ້ອຍ).
2. ການຫຼິ້ນໃນມຸມເກມການສຶກສາ ລຽນລຳດັບຮູບພາບ ໝໍ້ ແຕ່ນ້ອຍຫາໃຫຍ່.

### III. ສື່ການຮຽນ-ການສອນ

1. ເຄື່ອງນຸ່ງ, ຖ້ວຍ, ບ່ວງ, ຊາມ, ໂອ, ຈອກ...
2. ເກມລຽນລຳດັບຮູບພາບ ໝໍ້ ແຕ່ນ້ອຍ ຫາ ໃຫຍ່.
3. ບົດເພງ ຄອບຄົວຂອງຂ້ອຍ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຄອບຄົວຂອງຂ້ອຍ.
2. ຄູແນະນຳວິທີຫຼິ້ນຕາມມຸມ ບົດບາດສົມມຸດ, ມຸມເກມການສຶກສາ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການລໍຄອຍ, ການແບ່ງປັນ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເກມການສຶກສາ ຖືກຕ້ອງ ແລະ ມ່ວນຊື່ນ.

# ຈຸດປະສົງສຳລັບອາທິດທີ 3

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກສາມາດ:

1. ເຮັດທ່າທາງຕາມຈັງຫວະເພງ ເຮືອນຂອງຫຼານ, ມ້ຽນເຄື່ອງຫຼິ້ນ ຢ່າງມ່ວນຊື່ນ.
2. ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຫ້ອງນອນຂອງຂ້ອຍ ຢ່າງມ່ວນຊື່ນ.
3. ເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ເກືອເປັດ ແລະ ເກືອໄກ່, ລ້າງຖ້ວຍ ແລະ ເຊັດຖ້ວຍ ຢ່າງມ່ວນຊື່ນ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກສາມາດ:

1. ຮ້ອງເພງ ມ້ຽນເຄື່ອງຫຼິ້ນ ປະກອບທ່າທາງ.
2. ບອກການປະຕິບັດລະບຽບໃນຄອບຄົວ.
3. ບອກການ ປະຕິບັດຕົນໃນການເຄົາລົບນັບຖືຜູ້ໃຫຍ່.
4. ອ່ານອອກສຽງພະຍັນຊະນະ ມ.
5. ບອກໜ້າທີ່ຂອງຕົນເອງໃນຄອບຄົວ.
6. ເວົ້າເປັນຄຳຕາມຮູບພາບ: ມຸ້ງ ແລະ ຜ້າຫົ່ມ.
7. ບອກການເກັບມ້ຽນ, ຮັກສາເຄື່ອງຫຼິ້ນ ແລະ ເຄື່ອງໃຊ້.
8. ບອກຮູບຊົງເລຂາຄະນິດ: ຮູບວົງມົນ, ຕໍ່ຮູບວົງມົນຕິດກັນ 3 ຮູບ.
9. ຟັງການເລົ່າເລື່ອງຮ່ວມກັບໝູ່ເພື່ອນດ້ວຍຄວາມມ່ວນຊື່ນ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກສາມາດ:

1. ຂີດເສັ້ນຊື່ແຕ່ລຸ່ມຂຶ້ນເທິງຕາມຮອຍຈ້ຳຖືກຕ້ອງ.
2. ຮ້ອຍໝາກປັດເປັນຮູບຕ່າງໆຖືກຕ້ອງ.
3. ທາສີຟ້າ ໃສ່ຮູບພາບ ໂຕະ ແລະ ຕັ່ງຖືກຕ້ອງ.
4. ປັ້ນດິນເປັນຮູບຊົງແປ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນປະດິດສ້າງ ນຸ່ງເຄື່ອງ, ເກັບເຄື່ອງຫຼິ້ນ, ນ້ຳຂຶ້ນ, ນ້ຳລົງ ຢ່າງມ່ວນຊື່ນ ແລະ ປອດໄພ.
2. ຫຼິ້ນແບບຫຼິ້ນພື້ນເມືອງ ລູລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.
3. ຫຼິ້ນເຄື່ອງຫຼິ້ນໃນເດີ່ນ: ລອດບ້ວງ ແລະ ເດື່ອງດ່າງ ຢ່າງມ່ວນຊື່ນ ແລະ ປອດໄພ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກສາມາດ:

1. ຕໍ່ຮູບພາບຕາມແບບ ຮູບພາບ ເດັກນ້ອຍເຄົາລົບພໍ່,ແມ່, ຮູບພາບ: ເດັກນ້ອຍເກືອສັດລ້ຽງ, ຮູບພາບ: ເດັກນ້ອຍມ້ຽນເຄື່ອງຫຼິ້ນ, ເຄື່ອງໃຊ້, ຮູບພາບ: ເດັກນ້ອຍຍິງ ແລະ ຊາຍເກັບເຄື່ອງຫຼິ້ນ ໃສ່ກະຕ່າຖືກຕ້ອງ.
2. ນຳຮູບພາບທີ່ຄືກັນມາຈັບຄູ່ກັນ ຮູບພາບ: ເດັກນ້ອຍນັ່ງຟັງການໂອ້ລົມຂອງພໍ່ແມ່, ຮູບພາບ: ເດັກນ້ອຍ ອ່ານປຶ້ມ, ຮູບພາບ: ເດັກນ້ອຍນົບແມ່ຖືກຕ້ອງ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເກມການສຶກສາຢ່າງມ່ວນຊື່ນ.
3. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.
4. ຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈັງຫວະ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດເຮັດທ່າທາງຕາມຈັງຫວະເພງຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈັງຫວະເພງ ເຮືອນຂອງຫຼານ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດເພງ ເຮືອນຂອງຫຼານ.
3. ການບໍລິຫານມື (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານມື.
2. ໃຫ້ເດັກຍ່າງຕາມຫຼັງກັນຕາມບາດເຄາະຊ້າ, ໄວ.
3. ຄູແນະນຳການເຮັດທ່າທາງຕາມຈັງຫວະເພງ ເຮືອນຂອງຫຼານ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງຢຽດຂາຊື່ ແລະ ເອົາມືບີບຂາຄ່ອຍໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ການຍ່າງ ແລະ ການເຮັດທ່າທາງຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈັງຫວະ, ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ປະຕິບັດລະບຽບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຮ້ອງເພງ ມ້ຽນເຄື່ອງຫຼິ້ນ ປະກອບທ່າທາງ.
2. ບອກການປະຕິບັດລະບຽບໃນຄອບຄົວ.

### II. ເນື້ອໃນຕົ້ນຕໍ

1. ການຮ້ອງເພງ ມ້ຽນເຄື່ອງຫຼິ້ນ ປະກອບທ່າທາງ.
2. ການປະຕິບັດລະບຽບ: ກິນ, ນອນ, ຫຼິ້ນ, ໄປລາ, ມາຄອບ.

### III. ສື່ການຮຽນ-ການສອນ

1. ບົດເພງ ມ້ຽນເຄື່ອງຫຼິ້ນ (ປື້ມຄູ່ມືຄູ).
2. ຮູບພາບເດັກນ້ອຍຫຼິ້ນ ແລະ ເດັກນ້ອຍ ນົບພໍ່, ແມ່.
3. ຮູບພາບ: ເດັກນ້ອຍນອນ ແລະ ກິນອາຫານ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບເຄື່ອງຫຼິ້ນ.
2. ໃຫ້ເດັກຮ້ອງເພງ ມ້ຽນເຄື່ອງຫຼິ້ນ ປະກອບທ່າທາງ ແລະ ຄູສົນທະນາກັບເດັກກ່ຽວກັບເນື້ອໃນເພງ.
3. ໃຫ້ເດັກສັງເກດຮູບພາບ, ຄູສົນທະນາກັບເດັກກ່ຽວກັບການປະຕິບັດລະບຽບໃນຄອບຄົວ ແລະ ເດັກບອກການປະຕິບັດລະບຽບໃນຄອບຄົວ.
4. ໃຫ້ເດັກເຝິກປະຕິບັດການນົບ ພໍ່, ແມ່.
5. ໃຫ້ເດັກເວົ້າຄືນກ່ຽວກັບການປະຕິບັດລະບຽບ ແລະ ຮ້ອງເພງຄືນ.
6. ສຶກສາອົບຮົມເດັກກ່ຽວກັບ ການໄປລາ, ມາຄອບ, ກິນ ແລະ ນອນ ໃຫ້ຖືກເວລາ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຮ້ອງເພງ ມ້ຽນເຄື່ອງຫຼິ້ນ ປະກອບທ່າທາງ.
2. ການບອກການປະຕິບັດລະບຽບໃນຄອບຄົວ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້:  ຂີດເສັ້ນຊື່

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂີດເສັ້ນຊື່ ແຕ່ລຸ່ມຂຶ້ນເທິງຕາມຮອຍຈ້ຳຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການຂີດເສັ້ນຊື່ ແຕ່ລຸ່ມຂຶ້ນເທິງຕາມຮອຍຈ້ຳ.

## III. ສື່ການຮຽນ-ການສອນ

1. ສໍດຳ.
2. ປຶ້ມບົດເຝິກຫັດພາສາລາວ ເຫຼັ້ມທີ 1 ຫຼື ເຈ້ຍແບບຂີດເສັ້ນຊື່ ແຕ່ລຸ່ມຂຶ້ນ ເທິງຕາມຮອຍຈ້ຳ.

## IV. ກິດຈະກຳການ-ຮຽນການສອນ

1. ໃຫ້ເດັກເຮັດທ່າທາງດີດນີ້ວມື.
2. ຄູ ແນະນຳ, ສາທິດວິທີຂີດເສັ້ນຊື່ ແຕ່ລຸ່ມຂຶ້ນເທິງ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນອຸປະກອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຂີດເສັ້ນຊື່ ແຕ່ລຸ່ມຂຶ້ນເທິງຕາມຮອຍຈ້ຳ.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ນຸ່ງເຄື່ອງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ ນຸ່ງເຄື່ອງ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ນຸ່ງເຄື່ອງ.

### III. ສື່ການຮຽນ-ການສອນ

1. ເຄື່ອງນຸ່ງ: ກະໂປງ, ໂສ້ງ, ເສື້ອ ແລະ ສິ້ນ.
2. ວິທີຫຼິ້ນ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງນຸ່ງເສື້ອ.
2. ຄູແນະນຳ, ສາທິດວິທີຫຼິ້ນແບບຫຼິ້ນ ນຸ່ງເຄື່ອງ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ນຸ່ງເຄື່ອງ.
5. ສຶກສາອົບຮົມເດັກກ່ຽວກັບ ການຫຼິ້ນແບບຫຼິ້ນ ນຸ່ງເຄື່ອງ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນປະດິດສ້າງ ນຸ່ງເຄື່ອງ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ເດັກນ້ອຍເຄົາລົບພໍ່ແມ່.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ເດັກນ້ອຍເຄົາລົບພໍ່ແມ່.
2. ບົດເພງ ມ້ຽນເຄື່ອງຫຼິ້ນ.
3. ເກມເກົ່າ ເກມລຽນລຳດັບຮູບພາບ: ໝໍ້ ແຕ່ນ້ອຍ ຫາ ໃຫຍ່.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ມ້ຽນເຄື່ອງຫຼິ້ນ.
2. ຄູສະເໜີຊື່ເກມ.
3. ຄູສາທິດ ວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກ ຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຕໍ່ຮູບພາບຕາມແບບ.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເກມການສຶກສາຢ່າງຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມບົດບາດສົມມຸດ: ເປັນພໍ່, ແມ່ແຕ່ງກິນ, ອ້າຍ, ເອື້ອຍແຕ່ງຕົວໃຫ້ນ້ອງ.
2. ການຫຼິ້ນໃນມຸມເກມການສຶກສາ ເກມຕໍ່ຮູບພາບ: ເດັກນ້ອຍເຄົາລົບພໍ່, ແມ່.

### III. ສື່ການຮຽນ-ການສອນ

1. ເຮືອນນ້ອຍ, ຖ້ວຍ, ບ່ວງ, ຈານ, ຈອກ, ຕຸກກະຕາ ແລະ  ເຄື່ອງນຸ່ງ .
2. ເກມຕໍ່ຮູບພາບ: ເດັກເຄົາລົບພໍ່, ແມ່.
3. ບົດເພງ ຄອບຄົວຂອງຂ້ອຍ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຄອບຄົວຂອງຂ້ອຍ
2. ຄູແນະນຳວິທີຫຼິ້ນຕາມມຸມບົດບາດສົມມຸດ, ມຸມເກມການສຶກສາ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ການລໍຄອຍ, ການແບ່ງປັນ, ຄວາມອົດທົນ ແລະ ການເກັບມ້ຽນ ເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຫ້ອງນອນຂອງຂ້ອຍ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດຄຳຄ່ອງ ຫ້ອງນອນຂອງຂ້ອຍ.
3. ການບໍລິຫານຄໍ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຄໍ.
2. ໃຫ້ເດັກຍ່າງໃນບໍລິເວນຫ້ອງຕາມບາດເຄາະຊ້າ, ໄວ.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຫ້ອງນອນຂອງຂ້ອຍ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງລົມພັດໃບໄມ້.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ການຍ່າງ ແລະ ເຮັດທ່າທາງດ້ວຍຄວາມລະມັດລະວັງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ນັບຖືຜູ້ໃຫຍ່

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການປະຕິບັດຕົນໃນການເຄົາລົບນັບຖືຜູ້ໃຫຍ່.
2. ອ່ານອອກສຽງພະຍັນຊະນະ ມ.

### II. ເນື້ອໃນຕົ້ນຕໍ

1. ການເຄົາລົບນັບຖື: ຟັງຄວາມພໍ່ແມ່ ແລະ ຜູ້ໃຫຍ່, ຖາມສະບາຍດີ, ຂອບໃຈ, ນົບໄຫວ້ ແລະກົ້ມຫົວເວລາຍ່າງກາຍຜູ້ໃຫຍ່.
2. ການອ່ານອອກສຽງພະຍັນຊະນະ ມ.

### III. ສື່ການຮຽນ-ການສອນ

1. ຮູບພາບເດັກນັ່ງຟັງການໂອ້ລົມຂອງພໍ່ແມ່, ຮູບພາບເດັກນັ່ງອ່ານປຶ້ມ, ຮູບພາບເດັກນົບຜູ້ໃຫຍ່.
2. ບັດພະຍັນຊະນະ ມ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບການສະແດງຄວາມນັບຖືສະມາຊິກໃນຄອບຄົວ.
2. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກ ກ່ຽວກັບການສະແດງຄວາມນັບຖືຕໍ່ສະມາຊິກໃນຄອບຄົວ.
3. ໃຫ້ເດັກຝຶກປະຕິບັດຕົວຈິງ: ການຖາມສະບາຍດີ, ຂອບໃຈ, ນົບໄຫວ້ ແລະ ການຍ່າງກາຍຜູ້ໃຫຍ່ ແລະ ບອກການປະຕິບັດຕົນໃນການເຄົາລົບນັບຖື ຜູ້ໃຫຍ່..
4. ໃຫ້ເດັກອ່ານອອກສຽງພະຍັນຊະນະ ມ.
5. ໃຫ້ເດັກເວົ້າຄືນການປະຕິບັດຕົນໃນການເຄົາລົບຜູ້ໃຫຍ່ ແລະ ການອ່ານອອກສຽງພະຍັນຊະນະ.
6. ສຶກສາອົບຮົມເດັກກ່ຽວກັບ ການເຄົາລົບນັບຖືຜູ້ໃຫຍ່ ຟັງຄວາມພໍ່ແມ່ ແລະ ຜູ້ໃຫຍ່, ຖາມສະບາຍດີ, ຂອບໃຈ, ນົບໄຫວ້ ແລະ ກົ້ມຫົວເວລາຍ່າງກາຍຜູ້ໃຫຍ່.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກການປະຕິບັດຕົນໃນການເຄົາລົບນັບຖື ຜູ້ໃຫຍ່.
2. ການອ່ານອອກສຽງພະຍັນຊະນະ ມ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້:  ຮ້ອຍໝາກປັດ

### I. ຈຸດປະສົງ
ເພື່ອໃຫ້ເດັກສາມາດ ຮ້ອຍໝາກປັດເປັນຮູບຕ່າງໆ ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ
ການຮ້ອຍໝາກປັດເປັນຮູບຕ່າງໆ.

### III. ສື່ການຮຽນ-ການສອນ
ເຊືອກ, ໝາກປັດ ຫຼື ທໍ່ດູດ.

### IV. ກິດຈະກຳການຮຽນ-ການສອນ
1. ໃຫ້ເດັກເຮັດທ່າທາງ ກຳມື, ແບມື ແລະ ໂບກມື.
2. ຄູແນະນຳ. ສາທິດວິທີຮ້ອຍໝາກປັດສະຫຼັບສີ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນດິນປັ້ນໃຫ້ກັນ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ
ສັງເກດ:
1. ຄວາມຖືກຕ້ອງໃນການຮ້ອຍໝາກປັດເປັນຮູບຕ່າງໆ.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ລູ່ລີ່ເຂົ້າສານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ.

### III. ສື່ການຮຽນ-ການສອນ

ບົດຄຳຄ່ອງ ລູ່ລີ່ເຂົ້າສານ ແລະ ວິທີຫຼິ້ນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຍ່າງຊ້າໆເປັນວົງມົນ.
2. ຄູ ແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບ ການຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.
5. ສຶກສາອົບຮົມເດັກກ່ຽວກັບ ການຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບທີ່ຄືກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ນຳຮູບພາບທີ່ຄືກັນມາຈັບຄູ່ກັນຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຮູບພາບທີ່ຄືກັນ: ເດັກນ້ອຍນັ່ງຟັງການໂອ້ລົມຂອງພໍ່ແມ່, ອ່ານປຶ້ມ ແລະ ນົບແມ່.

### III. ສື່ການຮຽນ-ການສອນ

1. ເກມ ຈັບຄູ່ຮູບພາບທີ່ຄືກັນ: ເດັກນ້ອຍນັ່ງຟັງການໂອ້ລົມຂອງພໍ່, ແມ່, ອ່ານປຶ້ມ ແລະ ນົບແມ່.
2. ບົດເພງ ມ້ຽນເຄື່ອງຫຼິ້ນ.
3. ເກມເກົ່າ ເກມຕໍ່ຮູບພາບ: ເດັກນ້ອຍເຄົາລົບພໍ່, ແມ່.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ມ້ຽນເຄື່ອງຫຼິ້ນ
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຈັບຄູ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຈັບຄູ່ຮູບພາບທີ່ຄືກັນ.
2. ການມີສ່ວນຮ່ວມຂອງເດັກແຕ່ລະຄົນ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມບົດບາດສົມມຸດ: ຫຼິ້ນປ້ອນເຂົ້າ, ແຕ່ງຕົວໃຫ້ນ້ອງ ແລະ ແຕ່ງກິນ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ເອົາບ້ອກກ້ອນ, ແປມາປະກອບເປັນຮູບຕ່າງໆ ຕາມໃຈ.

### III. ສື່ການຮຽນ-ການສອນ

1. ຕຸກກະຕາ, ຖ້ວຍ, ບ່ວງ, ຈອກ, ຫວີ, ແວ່ນ, ແປ້ງເດັກ ແລະ ຢາງມັດຜົມ.
2. ບ້ອກກ້ອນ ແລະ ບ້ອກແປ (ໄມ້ ຫຼື ຢາງ).
3. ບົດຄຳຄ່ອງ ເຮືອນຫຼັງໜຶ່ງ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ເຮືອນຫຼັງໜຶ່ງ.
2. ຄູແນະນຳວິທີຫຼິ້ນຕາມມຸມບົດບາດສົມມຸດ, ມຸມເຄື່ອງຫຼິ້ນສຳຜັດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນ ຕາມມຸມ ແລະ ຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າໄດ້ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ: ເກືອເປັດ ແລະ ເກືອໄກ່.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານແອວ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກ ບໍລິຫານແອວ.
2. ໃຫ້ເດັກຍ່າງຕາມເສັ້ນຊື່ ທີ່ຄູກຳນົດ.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ: ເກືອເປັດ ແລະ ເກືອໄກ່.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງຫາຍໃຈເຂົ້າ, ອອກຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ການລະມັດລະວັງໃນເວລາເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ.

# ກິດຈະກຳວົງມົນ

## ຫົວຂໍ້:  ໜ້າທີ່ຂອງຕົນເອງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກໜ້າທີ່ຂອງຕົນເອງໃນຄອບຄົວ.
2. ເວົ້າເປັນຄຳຕາມຮູບພາບ ມຸ້ງ ແລະ ຜ້າຫົ່ມ.

### II. ເນື້ອໃນຕົ້ນຕໍ

1. ໜ້າທີ່ຂອງຕົນເອງຢູ່ໃນຄອບຄົວ: ຊ່ວຍເກືອສັດລ້ຽງ, ປັດກວາດ, ເຊັດຖູເຄື່ອງໃຊ້ໃນເຮືອນ.
2. ການເວົ້າເປັນຄຳຕາມຮູບພາບ ມຸ້ງ ແລະ ຜ້າຫົ່ມ.

### III. ສື່ການຮຽນ-ການສອນ

1. ຮູບພາບ:  ເດັກນ້ອຍເກືອສັດ, ປັດກວາດເຮືອນ ແລະ ເຊັດຖູເຄື່ອງໃຊ້ໃນເຮືອນ.
2. ຮູບພາບ ມຸ້ງ ແລະ ຜ້າຫົ່ມ
3. ບົດເພງ ເຮືອນຂອງຫຼານ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ເຮືອນຂອງຫຼານ ປະກອບທ່າທາງ.
2. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກກ່ຽວກັບການປະຕິບັດໜ້າທີ່ຂອງຕົນເອງຢູ່ໃນຄອບຄົວ.
3. ໃຫ້ເດັກບອກໜ້າທີ່ຂອງຕົນເອງໃນຄອບຄົວ.
4. ໃຫ້ເດັກເວົ້າເປັນຄຳຕາມຮູບ ມຸ້ງ ແລະ ຜ້າຫົ່ມ.
5. ໃຫ້ເດັກເວົ້າຄືນ ການບອກໜ້າທີ່ຂອງຕົນໃນຄອບຄົວ ແລະ ການເວົ້າເປັນຄຳຕາມຮູບພາບ.
6. ສຶກສາອົບຮົມເດັກກ່ຽວກັບ ການຊ່ວຍວຽກຄອບຄົວ, ເກືອສັດລ້ຽງ, ປັດກວາດ, ເຊັດຖູເຄື່ອງໃຊ້ໃນເຮືອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກໜ້າທີ່ຂອງຕົນເອງໃນຄອບຄົວ.
2. ການເວົ້າເປັນຄຳຕາມຮູບພາບ ມຸ້ງ ແລະ ຜ້າຫົ່ມ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້:  ຂີດເສັ້ນຊື່

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂີດເສັ້ນຊື່ ແຕ່ລຸ່ມຂຶ້ນເທິງຕາມຮອຍຈໍ້າຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຂີດເສັ້ນຊື່ ແຕ່ລຸ່ມຂຶ້ນເທິງຕາມຮອຍຈໍ້າ.

### III. ສື່ການຮຽນ-ການສອນ

ສໍດຳ ແລະ ປຶ້ມບົດເຝິກຫັດ ພາສາລາວ ເຫຼັ້ມທີ 1 ຫຼື ເຈ້ຍແບບຈໍ້າເມັດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງດີດນິ້ວມືຊ້າຍ, ຂວາ.
2. ຄູແນະນຳ, ການຂີດເສັ້ນຊື່ ແຕ່ລຸ່ມຂຶ້ນເທິງ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງການຂີດເສັ້ນຊື່ ແຕ່ລຸ່ມຂຶ້ນເທິງຕາມຮອຍຈໍ້າ.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້:  ແບບຫຼິ້ນ ເກັບເຄື່ອງໃຊ້ໃນເຮືອນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນແບບຫຼິ້ນປະດິດສ້າງ ເກັບເຄື່ອງໃຊ້ໃນເຮືອນ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ເກັບເຄື່ອງໃຊ້ໃນເຮືອນ.

### III. ສື່ການຮຽນ-ການສອນ

1. ຈອກ, ຖ້ວຍ ແລະ ບ່ວງ.
2. ວິທີຫຼິ້ນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຍ່າງ ແລະ ແລ່ນຕາມບາດເຄາະ ຊ້າ, ໄວ.
2. ຄູ ແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ເກັບເຄື່ອງໃຊ້ໃນເຮືອນ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ເກັບເຄື່ອງໃຊ້ໃນເຮືອນ.
5. ສຶກສາອົບຮົມເດັກກ່ຽວກັບ ການຫຼິ້ນແບບຫຼິ້ນ ເກັບເຄື່ອງໃຊ້ໃນເຮືອນ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນປະດິດສ້າງ ເກັບເຄື່ອງໃຊ້ໃນເຮືອນ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ເດັກນ້ອຍເກືອສັດລ້ຽງ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ເດັກນ້ອຍເກືອສັດລ້ຽງ.
2. ບົດເພງ ເຮືອນຂອງຫຼານ.
3. ເກມເກົ່າ ເກມຈັບຄູ່ຮູບພາບທີ່ຄືກັນ: ເດັກນ້ອຍນັ່ງຟັງການໂອ້ລົມຂອງພໍ່ແມ່, ອ່ານປື້ມ ແລະ ນັບມື.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ເຮືອນຂອງຫຼານ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຕໍ່ຮູບພາບຕາມແບບ.
2. ການມີສ່ວນຮ່ວມຂອງເດັກແຕ່ລະຄົນ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມບົດບາດສົມມຸດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມອ່ານ: ສັງເກດ, ອ່ານຮູບພາບ ເດັກເກືອໄກ່, ປັດກວາດເຮືອນ, ເຊັດຖ້ວຍ.
2. ການຫຼິ້ນໃນມຸມບົດບາດສົມມຸດ: ຫຼິ້ນໄປຕະຫຼາດຊື້ເຄື່ອງຫຼິ້ນ, ເຄື່ອງກິນ.

### III. ສື່ການຮຽນ-ການສອນ

1. ຮູບພາບເດັກນ້ອຍເກືອໄກ່, ປັດກວາດເຮືອນ, ເຊັດຖ້ວຍ
2. ກະຕ່າ, ໝາກໄມ້, ຜັກ, ກ່ອງສະບູ, ກ່ອງຢາຖູແຂ້ວ, ລົດນ້ອຍ ແລະ ໝາກບານ.
3. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບມຸມທີ່ເຄີຍຫຼິ້ນຜ່ານມາ.
2. ຄູແນະນຳວິທີຫຼິ້ນຕາມມຸມອ່ານ, ມຸມບົດບາດສົມມຸດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈັງຫວະ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈັງຫວະເພງ ມ້ຽນເຄື່ອງຫຼິ້ນ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດເພງ ມ້ຽນເຄື່ອງຫຼິ້ນ.
3. ການບໍລິຫານທ້ອງ ແລະ ຫຼັງ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານທ້ອງ ແລະ ຫຼັງ.
2. ໃຫ້ເດັກຍ່າງຕາມບາດເຄາະຊ້າ, ໄວ.
3. ຄູແນະນຳການເຮັດທ່າທາງຕາມຈັງຫວະເພງ ມ້ຽນເຄື່ອງຫຼິ້ນ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງລົມພັດໄປ, ມາ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງຕາມທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາເຮັດທ່າທາງຕາມຈັງຫວະເພງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ມ້ຽນເຄື່ອງຫຼິ້ນ ແລະ ເຄື່ອງໃຊ້

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການເກັບມ້ຽນເຄື່ອງຫຼິ້ນ ແລະ ເຄື່ອງໃຊ້.
2. ບອກຮູບຊົງເລຂາຄະນິດ: ຮູບວົງມົນ ແລະ ຕໍ່ຮູບວົງມົນຕິດກັນ 3 ຮູບ.

### II. ເນື້ອໃນຕົ້ນຕໍ

1. ການມ້ຽນເຄື່ອງຫຼິ້ນ ແລະ ເຄື່ອງໃຊ້:ຈອກ, ຖ້ວຍ, ບ່ວງ ສໍດຳ, ປຶ້ມ ໝອນ, ຜ້າຫົ່ມເຄື່ອງຫຼິ້ນ: ລົດຖີບນ້ອຍ ແລະ  ຕຸກກະຕາ.
2. ຮູບຊົງເລຂາຄະນິດ: ຮູບວົງມົນ.
3. ການຕໍ່ຮູບວົງມົນຕິດກັນ 3 ຮູບ.

### III. ສື່ການຮຽນ-ການສອນ

1. ບົດເພງ ມ້ຽນເຄື່ອງຫຼິ້ນ.
2. ເຄື່ອງໃຊ້: ຈອກ, ຖ້ວຍ, ບ່ວງ, ສໍດຳ, ປຶ້ມ, ໝອນ, ຜ້າຫົ່ມ , ເຄື່ອງຫຼິ້ນ: ລົດຖີບນ້ອຍ ແລະ ຕຸກກະຕາ.
3. ບັ໊ອກຮູບວົງມົນ 3 ຮູບ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ມ້ຽນເຄື່ອງຫຼິ້ນ ປະກອບທ່າທາງ.
2. ຄູສົນທະນາກັບເດັກກ່ຽວກັບ  ການເກັບມ້ຽນເຄື່ອງຫຼິ້ນ, ເຄື່ອງໃຊ້ ແລະ ເດັກບອກການເກັບມ້ຽນ ເຄື່ອງຫຼິ້ນ ແລະ ເຄື່ອງໃຊ້.
3. ໃຫ້ເດັກເຝິກປະຕິບັດຕົວຈິງການມ້ຽນເຄື່ອງຫຼິ້ນ ແລະ ເຄື່ອງໃຊ້ໃຫ້ຖືກບ່ອນ.
4. ໃຫ້ເດັກສັງເກດຮູບພາບ, ບອກຮູບຊົງເລຂາຄະນິດ: ຮູບວົງມົນ ແລະ ຕໍ່ຕິດກັນ 3 ຮູບ.
5. ໃຫ້ເດັກເວົ້າຄືນການເກັບມ້ຽນເຄື່ອງຫຼິ້ນ, ເຄື່ອງໃຊ້ ແລະບອກຮູບຊົງ ເລຂາຄະນິດ.
6. ສຶກສາອົບຮົມເດັກກ່ຽວກັບການຫຼິ້ນ: ຫຼິ້ນແລ້ວຕ້ອງຊ່ວຍກັນມ້ຽນເຄື່ອງຫຼິ້ນໄວ້ບ່ອນເກົ່າ ແລະ ບໍ່ມ້າງເພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກການເກັບມ້ຽນເຄື່ອງຫຼິ້ນ ແລະ ເຄື່ອງໃຊ້.
2. ການບອກຮູບຊົງເລຂາຄະນິດຮູບວົງມົນ ແລະ ຕໍ່ຮູບວົງມົນຕິດກັນ 3 ຮູບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ທາສີຮູບພາບ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ທາສີຟ້າໃສ່ຮູບພາບ ໂຕະ ແລະ ຕັ່ງຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການທາສີຟ້າໃສ່ຮູບພາບ ໂຕະ ແລະ ຕັ່ງ.

## III. ສື່ການຮຽນ-ການສອນ

1. ສີໄມ້ ແລະ ສີທຽນສີຟ້າ.
2. ປຶ້ມບົດເຝິກຫັດພາສາລາວ ເຫຼັ້ມ 1 ຫຼື ເຈ້ຍແບບຮູບພາບ: ໂຕະ, ຕັ່ງ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງທາສີຢູ່ກາງຫາວ.
2. ຄູແນະນຳ, ສາທິດການທາສີ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການອະນາໄມ ແລະ ການເກັບມ້ຽນອຸປະກອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການທາສີຟ້າໃສ່ຮູບພາບໂຕະ ແລະ ຕັ່ງ.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກໍາການຫຼິ້ນກາງແຈ້ງ

## ຫົວຂໍ້: ເຄື່ອງຫຼິ້ນໃນເດີ່ນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນເຄື່ອງຫຼິ້ນໃນເດີ່ນຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເຄື່ອງຫຼິ້ນ: ລອດບ້ວງ ແລະ ເດື່ອງດ່າງ.

### III. ສື່ການຮຽນ-ການສອນ

ບ້ວງລອດ ແລະ ເດື່ອງດ່າງ ຫຼື ເຄື່ອງຫຼິ້ນທີ່ມີໃນທ້ອງຖິ່ນ.

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກລຽນແຖວອົບອຸ່ນຮ່າງກາຍ ດ້ວຍການຍ່າງ ແລະ ແລ່ນ.
2. ຄູແນະນໍາວິທີຫຼິ້ນລອດບ້ວງ ແລະ ເດື່ອງດ່າງ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນລອດບ້ວງ ແລະ ເດື່ອງດ່າງ.
5. ສຶກສາອົບຮົມເດັກກ່ຽວກັບ ການຫຼິ້ນລອດບ້ວງ ແລະ ເດື່ອງດ່າງ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມ ຕໍ່ຮູບພາບ ເດັກນ້ອຍມ້ຽນເຄື່ອງຫຼິ້ນ, ເຄື່ອງໃຊ້.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ເດັກນ້ອຍມ້ຽນເຄື່ອງຫຼິ້ນ, ເຄື່ອງໃຊ້.
2. ບົດເພງ ມ້ຽນເຄື່ອງຫຼິ້ນ.
3. ເກມເກມເກົ່າ ເກມຕໍ່ຮູບພາບ ເດັກນ້ອຍເກືອສັດລ້ຽງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ມ້ຽນເຄື່ອງຫຼິ້ນ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຕໍ່ຮູບພາບຕາມແບບ.
2. ການມີສ່ວນຮ່ວມຂອງເດັກແຕ່ລະຄົນ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ
2. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມບົດບາດສົມມຸດ: ຖູເຮືອນ, ກວາດເຮືອນ, ມ້ຽນບ່ອນນອນ, ຊັກເຄື່ອງ
2. ການຫຼິ້ນໃນມຸມສຳຜັດ: ບ້ລອກກ້ອນ, ແປມາປະກອບເປັນຮູບຕ່າງໆ ຕາມໃຈ.

### III. ສື່ການຮຽນ-ການສອນ

1. ຟອຍຖູພື້ນ, ຟອຍ, ເຄື່ອງບ່ອນນອນ, ເຄື່ອງນຸ່ງ.
2. ບ້ລອກກ້ອນ ແລະ ບ້ລອກແປ (ໄມ້ ຫຼື ຢາງ).
3. ບົດຄຳຄ່ອງ ເຮືອນຫຼັງໜຶ່ງ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ເຮືອນຫຼັງໜຶ່ງ.
2. ຄູແນະນຳວິທີຫຼິ້ນຕາມມຸມບົດບາດສົມມຸດ, ມຸມເຄື່ອງຫຼິ້ນສຳຜັດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນ ເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ລ້າງຖ້ວຍ ແລະ ເຊັດຖ້ວຍ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານມື (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານມື.
2. ໃຫ້ເດັກຍ່າງຕາມບໍລິເວນຫ້ອງຕົບມືໄປພ້ອມ.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ: ລ້າງຖ້ວຍ ແລະ ເຊັດຖ້ວຍ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງເອົາມືກອດເອິກ ຫາຍໃຈເຂົ້າ, ອອກຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ຄວາມລະມັດລະວັງໃນເວລາເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້:  ຮັກສາເຄື່ອງໃຊ້ ແລະ ເຄື່ອງຫຼິ້ນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ

1. ຟັງເລົ່າເລື່ອງຮ່ວມກັບໝູ່ເພື່ອນດ້ວຍຄວາມມ່ວນຊື່ນ.
2. ບອກການຮັກສາເຄື່ອງໃຊ້ ແລະ ເຄື່ອງຫຼິ້ນໃນຄອບຄົວ.

### II. ເນື້ອໃນຕົ້ນຕໍ

1. ການຟັງເລົ່າເລື່ອງ ກະຕ່າຍນ້ອຍມ້ຽນມັດເຮືອນຊານ.
2. ການຮັກສາເຄື່ອງໃຊ້ ແລະ ເຄື່ອງຫຼິ້ນໃນຄອບຄົວ: ບໍ່ຖິ້ມ, ບໍ່ມ້າງເພເຄື່ອງໃຊ້ ແລະ ເຄື່ອງຫຼິ້ນ.

### III. ສື່ການຮຽນ-ການສອນ

1. ບົດເລື່ອງ ກະຕ່າຍນ້ອຍມ້ຽນມັດເຮືອນຊານ (ປື້ມຄູ່ມືຄູ).
2. ຮູບພາບປະກອບບົດເລື່ອງ.

### IV. ກິດຈະກຳການຮຽນ-ການສອນ

1. ຄູ ສົນທະນາກັບເດັກກ່ຽວກັບເລື່ອງທີ່ໄດ້ຟັງຜ່ານມາ.
2. ຄູເລົ່າເລື່ອງ ກະຕ່າຍນ້ອຍມ້ຽນມັດເຮືອນຊານ ແລະ ສົນທະນາກັບເດັກ ກ່ຽວກັບເນື້ອໃນບົດເລື່ອງ.
3. ຄູ ສົນທະນາກັບເດັກກ່ຽວກັບ ການຮັກສາເຄື່ອງຫຼິ້ນ ແລະ ເຄື່ອງໃຊ້ໃນຄອບຄົວ.
4. ໃຫ້ເດັກບອກການຮັກສາເຄື່ອງໃຊ້ ແລະ ເຄື່ອງຫຼິ້ນໃນຄອບຄົວ.
5. ໃຫ້ເດັກເວົ້າຄືນກ່ຽວກັບ ການຮັກສາເຄື່ອງໃຊ້ ແລະ ເຄື່ອງຫຼິ້ນໃນຄອບຄົວ.
6. ສຶກສາອົບຮົມເດັກກ່ຽວກັບ ການຮັກສາເຄື່ອງໃຊ້: ບໍ່ມ້າງເພ, ບໍ່ແກວ່ງຖິ້ມ ແລະ ຫຼິ້ນ ແລ້ວເກັບມ້ຽນບ່ອນເກົ່າ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຟັງເລົ່າເລື່ອງຮ່ວມກັບຫມູ່ເພື່ອນດ້ວຍຄວາມມ່ວນຊື່ນ.
2. ການບອກການຮັກສາເຄື່ອງໃຊ້ ແລະ ເຄື່ອງຫຼິ້ນໃນຄອບຄົວ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້:  ປັ້ນດິນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ປັ້ນດິນເປັນຮູບຊົງແປ.

### II. ເນື້ອໃນຕົ້ນຕໍ

ການປັ້ນດິນເປັນຮູບຊົງແປ.

### III. ສື່ການຮຽນ-ການສອນ

ດິນປັ້ນ, ສະບູ, ຊາມນ້ຳ, ຜ້າເຊັດມື ແລະ ຜ້າຢາງ ຫຼື ເຈ້ຍຮອງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກສັ່ນຄໍ່ມື  ແລະ ເຮັດທ່າທາງກວັກມື.
2. ຄູແນະນຳ, ສາທິດວິທີປັ້ນດິນ ເປັນຮູບຊົງແປ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການອະນາໄມມື ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມເອົາໃຈໃສ່ຂອງເດັກໃນການປັ້ນດິນເປັນຮູບຊົງແປ.
2. ຄວາມສາມັກຄີກັບໝູ່ເພື່ອນ.
3. ຄວາມຄ້າຍຄືຂອງຮູບປັ້ນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້:  ແບບຫຼິ້ນ ນ້ຳຂຶ້ນ, ນ້ຳລົງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ ນ້ຳຂຶ້ນ, ນ້ຳລົງ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ນ້ຳຂຶ້ນ, ນ້ຳລົງ.

### III. ສື່ການຮຽນ-ການສອນ

1. ສໍຂາວ.
2. ວິທີຫຼິ້ນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຢື້ປິດໝາກໄມ້ເທິງຕົ້ນໄມ້.
2. ຄູ ແນະນຳ ແລະ ສາທິດການຫຼິ້ນແບບຫຼິ້ນ ນ້ຳຂຶ້ນ, ນ້ຳລົງ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ນ້ຳຂຶ້ນ, ນ້ຳລົງ.
5. ສຶກສາອົບຮົມເດັກ ກ່ຽວກັບການຫຼິ້ນແບບຫຼິ້ນ ນ້ຳຂຶ້ນ, ນ້ຳລົງ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ  ການຫຼິ້ນແບບຫຼິ້ນປະດິດສ້າງ ນ້ຳຂຶ້ນ, ນ້ຳລົງ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ເດັກນ້ອຍຍິງ ແລະ ຊາຍເກັບເຄື່ອງຫຼິ້ນໃສ່ກະຕ່າ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍເກັບເຄື່ອງຫຼິ້ນໃສ່ກະຕ່າ.
2. ບົດເພງ ຄອບຄົວຂອງຂ້ອຍ.
3. ເກມເກົ່າ ເກມຕໍ່ຮູບພາບ: ເດັກນ້ອຍມ້ຽນເຄື່ອງຫຼິ້ນ, ເຄື່ອງໃຊ້.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຄອບຄົວຂອງຂ້ອຍ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນ ເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຕໍ່ຮູບພາບຕາມແບບ.
2. ການມີສ່ວນຮ່ວມຂອງເດັກແຕ່ລະຄົນ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ
2. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມອ່ານ: ສັງເກດ, ອ່ານຮູບພາບ (ລົດນ້ອຍ, ຕຸກກະຕາ, ຖ້ວຍ, ຈອກ) ແລະ ປຶ້ມເລື່ອງປະກອບຮູບພາບ ກະຕ່າຍນ້ອຍມ້ຽນມັດເຮືອນຊານ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ໃສ່ກະດຸມເສື້ອໃຫ້ຕຸກກະຕາ (ດຸມແຕັບ, ດຸມມີຮູ)

### III. ສື່ການຮຽນ-ການສອນ

1. ຮູບພາບລົດນ້ອຍ, ຕຸກກະຕາ, ຖ້ວຍ, ຈອກ ແລະ ປຶ້ມເລື່ອງປະກອບຮູບພາບ ກະຕ່າຍນ້ອຍມ້ຽນມັດເຮືອນຊານ.
2. ເສື້ອ ດຸມແຕັບ, ດຸມມີຮູ ແລະ ຕຸກກະຕາ.
3. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບ ມຸມທີ່ເຄີຍຫຼິ້ນຜ່ານມາ.
2. ຄູແນະນຳວິທີຫຼິ້ນຕາມມຸມອ່ານ, ມຸມເຄື່ອງຫຼິ້ນສຳຜັດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

# ຈຸດປະສົງສຳລັບອາທິດທີ 4

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກສາມາດ:

1. ເຮັດທ່າທາງຕາມຂໍ້ຕົກລົງ ເຄາະ 1 ບາດ ເຮັດທ່າທາງອຸ້ມນ້ອງ ແລະ ເຄາະ 2 ບາດ ເຮັດທ່າທາງຫວີຜົມ ຖືກຕ້ອງ ແລະ ມ່ວນຊື່ນ.
2. ເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ການກິນອາຫານ ແລະ ດື່ມນ້ຳຢ່າງມ່ວນຊື່ນ.
3. ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຄອບຄົວຂອງຂ້ອຍ, ຫ້ອງນອນຂອງຂ້ອຍ ຢ່າງມ່ວນຊື່ນ.
4. ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ: ການຍ່າງ ແລະ ການນັ່ງ ຢ່າງມ່ວນຊື່ນ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກສາມາດ:

1. ບອກມາລະຍາດໃນການເວົ້າ, ຟັງ ແລະ ເບິ່ງໂທລະພາບ.
2. ອ່ານອອກສຽງພະຍັນຊະນະ ນ.
3. ບອກມາລະຍາດໃນການກິນ , ການດື່ມ. ການນັ່ງ, ການຍ່າງ ແລະ ການໄປ, ມາ.
4. ປຽບທຽບນ້ອຍ, ໃຫຍ່.
5. ເລົ່າຄຳຄ່ອງ ຄອບຄົວຂອງຂ້ອຍ ປະກອບທ່າທາງ.
6. ບອກມາລະຍາດໃນການນົບຜູ້ໃຫຍ່ ແລະ ການໄຫວ້ພະ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກສາມາດ:

1. ຂີດເສັ້ນຊື່ເບື້ອງຂວາແຕ່ເທິງລົງລຸ່ມຕາມຮອຍຈ້ຳຖືກຕ້ອງ.
2. ປັ້ນດິນເປັນທ່ອນສັ້ນຍາວຕ່າງໆ.
3. ຂີດຂຽນຕາມຮອຍຈ້ຳຕົວເລກ 2 ຖືກຕ້ອງ.
4. ຂີດເສັ້ນຊື່ເບື້ອງຂວາແຕ່ລຸ່ມຂຶ້ນເທິງຕາມຮອຍຈ້ຳຖືກຕ້ອງ.
5. ຂີດເສັ້ນຊື່ເບື້ອງຊ້າຍແຕ່ລຸ່ມຂຶ້ນເທິງຕາມຮອຍຈ້ຳຖືກຕ້ອງ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນເຄື່ອງຫຼິ້ນໃນເດີ່ນ: ໂອ້ນຊາ ແລະ ເຄື່ອງດ່າງ ຢ່າງມ່ວນຊື່ນ ແລະ ປອດໄພ.
2. ຫຼິ້ນແບບຫຼິ້ນປະດິດສ້າງ ຕາກເຄື່ອງ, ເກັບເຄື່ອງໃຊ້ໃນເຮືອນ ຢ່າງມ່ວນຊື່ນ ແລະ ປອດໄພ.
3. ຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ, ເຊື່ອງຜ້າ ຢ່າງມ່ວນຊື່ນ ແລະ ປອດໄພ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກສາມາດ:

1. ຕໍ່ຮູບພາບຕາມແບບ ຮູບພາບ: ເດັກນ້ອຍນັ່ງຟັງຜູ້ໃຫຍ່ເວົ້າ, ຮູບພາບ: ເດັກນ້ອຍນັ່ງພັບແພບ, ຮູບພາບ: ເດັກນ້ອຍນົບຜູ້ໃຫຍ່, ຮູບພາບ: ເດັກນ້ອຍຄອບລາພໍ່, ແມ່ໄປໂຮງຮຽນຖືກຕ້ອງ.
2. ລຽນລຳດັບຮູບພາບ: ຈອກ ແຕ່ນ້ອຍ ຫາ ໃຫຍ່ຖືກຕ້ອງ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເກມການສຶກສາຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.
3. ຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.
4. ຫຼິ້ນໃນມຸມສິລະປະສ້າງສັນຢ່າງມ່ວນຊື່ນ.
5. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຂໍ້ຕົກລົງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຂໍ້ຕົກລົງຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຂໍ້ຕົກລົງ: ເຄາະ 1 ບາດ ເຮັດທ່າທາງ ອຸ້ມນ້ອງ, ເຄາະ 2 ບາດເຮັດທ່າທາງຫວີຜົມ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານແຂນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກ ບໍລິຫານແຂນ.
2. ໃຫ້ເດັກແລ່ນຊ້າໆຕາມບໍລິເວນຫ້ອງຮຽນ.
3. ຄູສາທິດການເຮັດທ່າທາງຕາມຂໍ້ຕົກລົງ: ເຄາະ 1 ບາດ ເຮັດທ່າທາງອຸ້ມນ້ອງ, ເຄາະ 2 ບາດ ເຮັດທ່າທາງຫວີຜົມ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງເຮັດທ່າທາງມັດໄຕ່ຕາມຕົນຕົວ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ການແລ່ນ ແລະ ການເຮັດທ່າທາງຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການປະຕິບັດຕາມຂໍ້ຕົກລົງ.
2. ຄວາມເບີກບານຂອງເດັກ.

# ກິດຈະກຳວົງມົນ

## ຫົວຂໍ້: ມາລະຍາດໃນການເວົ້າ, ຟັງ ແລະ ເບິ່ງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກມາລະຍາດໃນການເວົ້າ, ຟັງ ແລະ ເບິ່ງໂທລະພາບ.
2. ອ່ານອອກສຽງພະຍັນຊະນະ ນ.

### II. ເນື້ອໃນຕົ້ນຕໍ

1. ມາລະຍາດໃນການເວົ້າ, ຟັງ ແລະ ເບິ່ງ: ເວົ້າກັບພໍ່ແມ່, ອ້າຍ,  ເອື້ອຍ, ນ້ອງ ແລະ ເພື່ອນບ້ານດ້ວຍຄຳສຸພາບ: ໂດຍ, ຂ້ານ້ອຍ, ຂ້ອຍ, ເຈົ້າ, ຂໍໂທດ, ຂອບໃຈ. ບໍ່ຕັດຄວາມເວົ້າຜູ້ໃຫຍ່ ແລະ ເບິ່ງໂທລະພາບເປັນເວລາ.
2. ການອ່ານອອກສຽງພະຍັນຊະນະ ນ.

### III. ສື່ການຮຽນ-ການສອນ

1. ຫຸ່ນມືຮູບຊ້າງ.
2. ບົດຄຳຄ່ອງ ເຮືອນຫຼັງໜຶ່ງ.
3. ບັດພະຍັນຊະນະ ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ເຮືອນຫຼັງໜຶ່ງ ປະກອບທ່າທາງ.
2. ຄູໃຊ້ຫຸ່ນມືໂອ້ລົມມາລະຍາດ ໃນການເວົ້າ, ຟັງ ແລະ ເບິ່ງ ແລະ ເດັກບອກມາລພະຍາດໃນການເວົ້າ, ຟັງ, ເບິ່ງ.
3. ໃຫ້ເດັກເຝິກປະຕິບັດຕົວຈິງໃນການເວົ້າ, ຟັງ ແລະ ເບິ່ງ.
4. ໃຫ້ເດັກອ່ານອອກສຽງພະຍັນຊະນະ  ນ .
5. ໃຫ້ເດັກເວົ້າຄືນການເວົ້າ, ການຟັງ ແລະ ເບິ່ງໂທລະພາບ, ການອ່ານອອກສຽງພະຍັນຊະນະ.
6. ສຶກສາອົບຮົມເດັກກ່ຽວກັບ ການເວົ້າກັບພໍ່, ແມ່, ອ້າຍ, ເອື້ອຍຕ້ອງ ໂດຍ, ຂ້ານ້ອຍ, ຂ້ອຍ ແລະ ເຈົ້າ,

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກມາລະຍາດໃນການເວົ້າ, ຟັງ ແລະ ເບິ່ງໂທລະພາບ.
2. ການອ່ານອອກສຽງພະຍັນຊະນະ ນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດເສັ້ນຊື່ເນີ້ງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂີດເສັ້ນຊື່ເນີ້ງຂວາ ແຕ່ເທິງລົງລຸ່ມຕາມຮອຍຈ້ຳຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຂີດເສັ້ນຊື່ເນີ້ງຂວາ ແຕ່ເທິງລົງລຸ່ມຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ສໍດຳ.
2. ປຶ້ມບົດເຝິກຫັດ ພາສາລາວ ເຫຼັ້ມທີ 1 ຫຼື ເຈ້ຍແບບຂີດເສັ້ນຊື່ເນີ້ງຂວາ ແຕ່ເທິງລົງລຸ່ມຕາມຮອຍຈ້ຳ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງດີດນີ້ວມືເບື້ອງຊ້າຍ, ຂວາ.
2. ຄູແນະນຳ, ສາທິດວິທີຂີດເສັ້ນຊື່ເນີ້ງຂວາ ແຕ່ເທິງລົງລຸ່ມ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຂີດເສັ້ນຊື່ເນີ້ງຂວາ ແຕ່ເທິງລົງລຸ່ມຕາມຮອຍຈ້ຳ.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ເຄື່ອງຫຼິ້ນໃນເດີ່ນ

**I. ຈຸດປະສົງ**

ເພື່ອໃຫ້ເດັກສາມາດ ຫຼິ້ນເຄື່ອງຫຼິ້ນໃນເດີ່ນຢ່າງມ່ວນຊື່ນ ແລະ ປອດໄພ.

**II. ເນື້ອໃນຕົ້ນຕໍ**

ການຫຼິ້ນເຄື່ອງຫຼິ້ນ ຫຼິ້ນເດື່ອງດ່າງ ແລະ ໂອ້ນຊາ.

**III. ສື່ການຮຽນ-ການສອນ**

ເດື່ອງດ່າງ, ໂອ້ນຊາ ຫຼື ເຄື່ອງຫຼິ້ນທີ່ມີໃນທ້ອງຖິ່ນ.

**IV. ກິດຈະກຳການຮຽນ-ການສອນ**

1. ໃຫ້ເດັກບິດແອວ, ວາແຂນ ແລະ ພັບແຂນ.
2. ຄູແນະນຳວິທີຫຼິ້ນເດື່ອງດ່າງ ແລະ ໂອ້ນຊາ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ
4. ໃຫ້ເດັກເວົ້າຄືນກ່ຽວກັບ ການຫຼິ້ນເດື່ອງດ່າງ ແລະ ໂອ້ນຊາ
5. ສຶກສາອົບຮົມເດັກກ່ຽວກັບ ການຫຼິ້ນເດື່ອງດ່າງ ແລະ ໂອ້ນຊາຢ່າງປອດໄພ.

**V. ການວັດ ແລະ ປະເມີນຜົນ**

ສັງເກດ ການຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ເດັກນ້ອຍນັ່ງຟັງຜູ້ໃຫຍ່ເວົ້າ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ເດັກນ້ອຍນັ່ງຟັງຜູ້ໃຫຍ່ເວົ້າ.
2. ບົດຄຳຄ່ອງ ເຮືອນຫຼັງໜຶ່ງ.
3. ເກມເກົ່າ ເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍ ເກັບເຄື່ອງຫຼິ້ນໃສ່ກະຕ່າ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ເຮືອນຫຼັງໜຶ່ງ
2. ຄູສະເໜີຊື່ເກມ.
3. ຄູສາທິດການຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຕໍ່ຮູບພາບຕາມແບບ.
2. ການມີສ່ວນຮ່ວມຂອງເດັກແຕ່ລະຄົນ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເກມການສຶກສາ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເກມການສຶກສາຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເກມການສຶກສາ ເກມຕໍ່ຮູບພາບ: ເດັກນ້ອຍນັ່ງຟັງຜູ້ໃຫຍ່.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຕີກອງ, ສັ່ນໝາກກະແຊັກ, ເປົ່າແຄນ ແລະ ຈັບໄມໂຄໂຟນຮ້ອງເພງ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ເດັກນ້ອຍນັ່ງຟັງຜູ້ໃຫຍ່.
2. ກອງ, ໝາກກະແຊັກ, ແຄນ ແລະ ໄມໂຄໂຟນ ຫຼື ເຄື່ອງດົນຕີອື່ນໆທີ່ມີໃນທ້ອງຖິ່ນ.
3. ບົດຄຳຄ່ອງ ເຮືອນຫຼັງໜຶ່ງ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ເຮືອນຫຼັງໜຶ່ງ.
2. ຄູແນະນຳວິທີຫຼິ້ນຕາມມຸມເກມການສຶກສາ, ມຸມເຄື່ອງຫຼິ້ນສຳຜັດ ແລະ ການເກັບມ້ຽນ.
3. ຄູເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ການກິນ ແລະ ການດື່ມ

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານຄໍ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກ ບໍລິຫານຄໍ.
2. ໃຫ້ເດັກຍ່າງເປັນສອງແຖວຊື່ຕາມບໍລິເວນຫ້ອງຮຽນ.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ການກິນ ແລະ ການດື່ມ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງລົມພັດໃບໄມ້.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ມາລະຍາດໃນການກິນ ແລະ ດື່ມ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກມາລະຍາດໃນການກິນ ແລະ ດື່ມ.
2. ປຽບທຽບນ້ອຍ, ໃຫຍ່.

### II. ເນື້ອໃນຕົ້ນຕໍ

1. ມາລະຍາດໃນການກິນ ແລະ ດື່ມ: ກິນຊ້າບໍ່ໃຫ້ອາຫານຕົກເຮ່ຍ, ຫຍ້ຳອາຫານໃຫ້ແຫຼກ, ບໍ່ມີສຽງດັງ ແລະ ດື່ມນ້ຳດ້ວຍຄວາມລະມັດລະວັງ ບໍ່ໃຫ້ນ້ຳເຮ່ຍ..
2. ການປຽບທຽບຖ້ວຍ ນ້ອຍ, ໃຫຍ່.

### III. ສື່ການຮຽນ-ການສອນ

1. ເຂົ້າ, ອາຫານ, ນ້ຳດື່ມ ແລະ ຈອກ.
2. ຖ້ວຍນ້ອຍ ແລະ ຖ້ວຍໃຫຍ່.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບ ອາຫານທີ່ເຄີຍກິນ ແລະ ເຄື່ອງດື່ມທີ່ເຄີຍດື່ມ.
2. ຄູສົນທະນາກັບເດັກກ່ຽວກັບ ມາລະຍາດການກິນອາຫານ, ການດື່ມນ້ຳ ແລະ ເດັກບອກ ມາລະຍາດໃນການກິນ ແລະ ດື່ມ.
3. ໃຫ້ເດັກເຝິກປະຕິບັດຕົວຈິງໃນການກິນ, ດື່ມ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກປຽບທຽບຖ້ວຍນ້ອຍ, ຖ້ວຍໃຫຍ່.
5. ໃຫ້ເດັກເວົ້າຄືນ ກ່ຽວກັບການບອກມາລະຍາດໃນການກິນ, ດື່ມ ແລະ ການປຽບທຽບ ນ້ອຍ, ໃຫຍ່.
6. ສຶກສາອົບຮົມເດັກກ່ຽວກັບ ການກິນເຂົ້າ, ການດື່ມນ້ຳ ຕ້ອງກິນຊ້າບໍ່ໃຫ້ອາຫານຕົກເຮ່ຍ, ຫຍ້ຳອາຫານໃຫ້ແຫຼກ, ບໍ່ມີສຽງດັງ ແລະ ການເກັບມ້ຽນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກມາລະຍາດໃນການກິນ ແລະ ດື່ມ.
2. ການປຽບທຽບນ້ອຍ, ໃຫຍ່.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ປັ້ນດິນ

**I. ຈຸດປະສົງ**

ເພື່ອໃຫ້ເດັກສາມາດ ປັ້ນດິນເປັນທ່ ເສັ້ນ, ຍາວຕ່າງໆ.

**II. ເນື້ອໃນຕົ້ນຕໍ**

ການປັ້ນດິນເປັນທ່ ສັ້ນ, ຍາວ.

**III. ສື່ການຮຽນ-ການສອນ**

ດິນປັ້ນ, ຊາມນ້ຳລ້າງມື, ສະບູ, ຜ້າເຊັດມື ແລະ ຜ້າຢາງ ຫຼື ເຈ້ຍຮອງ,

**IV. ກິດຈະກຳການຮຽນ-ການສອນ**

1. ໃຫ້ເດັກສັ່ນຄໍ່ມື ແລະ ດິ້ດນິ້ວມື.
2. ຄູແນະນຳ, ສາທິດວິທີປັ້ນເປັນທ່ ສັ້ນ, ຍາວ ແລະ ການເກັບມ້ຽນ.
3. ໃຫ້ເດັກປັ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການອະນາໄມມື ແລະ ການເກັບມ້ຽນອຸປະກອນ.

**V. ການວັດ ແລະ ປະເມີນຜົນ**

ສັງເກດ:

1. ຄວາມເອົາໃຈໃສ່ຂອງເດັກໃນການປັ້ນດິນເປັນທ່ສັ້ນ, ຍາວຕ່າງໆ.
2. ຄວາມສາມັກຄີກັບໝູ່ເພື່ອນ.
3. ຄວາມຄ້າຍຄືຂອງຮູບປັ້ນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້:  ແບບຫຼິ້ນ ລູ່ລີ່ເຂົ້າສານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ.

### III. ສື່ການຮຽນ-ການສອນ

ບົດຄຳຄ່ອງ ລູ່ລີ່ເຂົ້າສານ ແລະ ວິທີຫຼິ້ນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກແລ່ນຕາມບາດເຄາະຊ້າ, ໄວ.
2. ຄູແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບ ການຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.
5. ສຶກສາອົບຮົມເດັກກ່ຽວກັບ ການຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ລຽນລຳດັບຮູບພາບນ້ອຍ ຫາ ໃຫຍ່ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມລຽນລຳດັບຮູບພາບ ຈອກແຕ່ນ້ອຍ ຫາ ໃຫຍ່.

### III. ສື່ການຮຽນ-ການສອນ

1. ເກມລຽນລຳດັບຮູບພາບ ຈອກແຕ່ນ້ອຍຫາໃຫຍ່.
2. ບົດຄຳຄ່ອງ ເຮືອນຫຼັງໜຶ່ງ.
3. ເກມເກົ່າ ເກມຕໍ່ຮູບພາບ ເດັກນ້ອຍນັ່ງຟັງຜູ້ໃຫຍ່ເວົ້າ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ເຮືອນຫຼັງໜຶ່ງ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມລຽນລຳດັບຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການລຽນລຳດັບຮູບພາບນ້ອຍ ຫາ ໃຫຍ່.
2. ຄວາມພະຍາຍາມຂອງເດັກ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ :

1. ຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ
2. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມອ່ານ: ສັງເກດ,ອ່ານຮູບພາບ (ເຂົ້າ,ຈອກ, ອາຫານ ແລະ ນ້ຳດື່ມ).
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຫຼິ້ນບ໋ອກກ້ອນ, ບ໋ອກແປປະກອບເປັນຕັ່ງ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ເຂົ້າ,ຈອກ, ອາຫານ ແລະ ນ້ຳດື່ມ.
2. ບ໋ອກກ້ອນ ແລະ ບ໋ອກແປ.
3. ບົດເພງ ຄອບຄົວຂອງຂ້ອຍ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຄອບຄົວຂອງຂ້ອຍ.
2. ຄູແນະນຳວິທີຫຼິ້ນໃນມຸມອ່ານ, ມຸມເຄື່ອງຫຼິ້ນສຳຜັດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນ ເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຄອບຄົວຂອງຂ້ອຍ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດຄຳຄ່ອງ ຄອບຄົວຂອງຂ້ອຍ.
3. ການບໍລິຫານຂ້າງ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກ ບໍລິຫານຂ້າງ.
2. ໃຫ້ເດັກຍ່າງເປັນວົງມົນແກ່ວງແຂນໄປຕາມບາດເຄາະຊ້າ, ໄວ.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຄອບຄົວຂອງຂ້ອຍ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງເອົາມືບີບຂາຄ່ອຍໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງປະກອບເນື້ອໃນຄຳຄ່ອງ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ມາລະຍາດໃນການນັ່ງ ແລະ ຍ່າງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ບອກມາລະຍາດໃນການ ນັ່ງ ແລະ ການຍ່າງ

### II. ເນື້ອໃນຕົ້ນຕໍ

ມາລະຍາດໃນການນັ່ງ ແລະ ຍ່າງ:  ນັ່ງພັບແພບ, ຍ່າງບໍ່ໃຊ້ສຽງດັງ ແລະ ຍ່າງກາຍຜູ້ໃຫຍ່ຕ້ອງກົ້ມຫົວ.

### III. ສື່ການຮຽນ-ການສອນ

1. ບົດເພງ ຄອບຄົວຂອງຂ້ອຍ.
2. ຮູບພາບ ເດັກນ້ອຍນັ່ງພັບແພບ

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຄອບຄົວຂອງຂ້ອຍ ປະກອບທ່າທາງ.
2. ຄູສົນທະນາກັບເດັກກ່ຽວກັບມາລະຍາດໃນການ ນັ່ງ ແລະ ການຍ່າງ.
3. ໃຫ້ເດັກເຝິກປະຕິບັດຕົວຈິງ ການ ນັ່ງ ແລະ ການຍ່າງ.
4. ໃຫ້ເດັກບອກມາລະຍາດ ໃນການນັ່ງ ແລະ ຍ່າງ.
5. ໃຫ້ເດັກເວົ້າຄືນກ່ຽວກັບມາລະຍາດໃນການ ນັ່ງ ແລະ ການຍ່າງ.
6. ສຶກສາອົບຮົມເດັກກ່ຽວກັບການຍ່າງ ເວລາຍ່າງກາຍຜູ້ໃຫຍ່ຕ້ອງກົ້ມຫົວ, ຍ່າງບໍ່ໃຊ້ສຽງດັງ ແລະ ນັ່ງພັບແພບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການບອກມາລະຍາດໃນການ ນັ່ງ ແລະ ຍ່າງ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນຕົວເລກ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂີດຂຽນຕາມຮອຍຈ້ຳ ຕົວເລກ 2 ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນຕາມຮອຍຈ້ຳ ຕົວເລກ 2.

### III. ສື່ການຮຽນ-ການສອນ

1. ສໍດຳ.
2. ປຶ້ມບົດເຝິກຫັດຄະນິດສາດ ເຫຼັ້ມທີ 1 ຫຼື ເຈ້ຍເລກ 2 ທີ່ມີຮອຍຈ້ຳ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຂຽນຕົວເລກຢູ່ກາງຫາວ.
2. ຄູແນະນຳ, ສາທິດວິທີຂີດຂຽນຕົວເລກ 2 ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການອະນາໄມ ແລະ ການເກັບມ້ຽນອຸປະກອນ

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຂີດຂຽນຕາມຮອຍຈ້ຳ ຕົວເລກ 2.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້:  ແບບຫຼິ້ນ ເກັບເຄື່ອງໃຊ້ໃນເຮືອນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ ເກັບເຄື່ອງໃຊ້ໃນເຮືອນ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ເກັບເຄື່ອງໃຊ້ໃນເຮືອນ.

### III. ສື່ການຮຽນ-ການສອນ

1. ບ່ວງ, ຖ້ວຍ, ຊາມ ແລະ ຈອກ.
2. ໝາກຫວິດ.
3. ວິທີຫຼິ້ນ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຢືນຄ້ຳແຂວ ງວາກຊ້າຍ, ຂວາ, ກົ້ມ, ເງີຍ ແລະ ເດ່ຂາໄປທາງໜ້າ.
2. ຄູ ແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ເກັບເຄື່ອງໃຊ້ໃນເຮືອນ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບ ການຫຼິ້ນແບບຫຼິ້ນ ເກັບເຄື່ອງໃຊ້ໃນເຮືອນ.
5. ສຶກສາອົບຮົມເດັກກ່ຽວກັບ ການຫຼິ້ນແບບຫຼິ້ນ ເກັບເຄື່ອງໃຊ້ໃນເຮືອນ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ  ການຫຼິ້ນແບບຫຼິ້ນປະດິດສ້າງ ເກັບເຄື່ອງໃຊ້ໃນເຮືອນ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ  ເດັກນ້ອຍນັ່ງພັບແພບ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ  ເດັກນ້ອຍນັ່ງພັບແພບ.
2. ບົດເພງ ຄອບຄົວຂອງຂ້ອຍ.
3. ເກມເກົ່າ ເກມລຽນລຳດັບຮູບພາບ: ຈອກ ແຕ່ນ້ອຍ ຫາ ໃຫຍ່.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຄອບຄົວຂອງຂ້ອຍ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກ ຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການລໍຖ້າ, ການແບ່ງປັນ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຕໍ່ຮູບພາບຕາມແບບ.
2. ການມີສ່ວນຮ່ວມຂອງເດັກແຕ່ລະຄົນ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມສິລະປະສ້າງສັນຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເກມການສຶກສາໄດ້ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມສິລະປະສ້າງສັນ: ຂີດຂຽນຕົວເລກ 2 ຕາມຮອຍຈ້ຳ.
2. ການຫຼິ້ນໃນມຸມເກມການສຶກສາ: ເກມຕໍ່ຮູບພາບ: ເດັກນ້ອຍນັ່ງພັບແພບ.

### III. ສື່ການຮຽນ-ການສອນ

1. ເຈ້ຍຮອຍຈ້ຳເລກ 2, ສໍຫຽນ ຫຼື ສີໄມ້.
2. ເກມຕໍ່ຮູບພາບ ເດັກນ້ອຍນັ່ງພັບແພບ.
3. ບົດເພງ ຄອບຄົວຂອງຂ້ອຍ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຄອບຄົວຂອງຂ້ອຍ.
2. ຄູແນະນຳວິທີຫຼິ້ນຕາມມຸມສິລະປະສ້າງສັນ, ມຸມເກມການສຶກສາ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນໃນມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ ມີຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງໄຫວເປັນຜູ້ນຳ, ຜູ້ຕາມ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ ການຍ່າງ ແລະ ການນັ່ງ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານແຂນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານແຂນ.
2. ໃຫ້ເດັກຍ່າງເປັນສອງແຖວຊື່ຕາມບໍລິເວນຫ້ອງຮຽນຕາມບາດເຄາະ ຊ້າ, ໄວ.
3. ຄູສາທິດການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ: ການຍ່າງ ແລະ ການນັ່ງ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງຢຽດຂາຊື່ ເອົາມືແຕະປາຍຕີນ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ການຍ່າງ ແລະ ການນັ່ງຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ມາລະຍາດໃນການນົບ, ໄຫວ້

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ເລົ່າຄຳຄ່ອງ ຄອບຄົວຂອງຂ້ອຍ ປະກອບທ່າທາງ.
2. ບອກມາລະຍາດໃນການນົບຜູ້ໃຫຍ່ ແລະ ການໄຫວ້ພະ.

### II. ເນື້ອໃນຕົ້ນຕໍ

1. ການເລົ່າຄຳຄ່ອງ ຄອບຄົວຂອງຂ້ອຍ ປະກອບທ່າທາງ.
2. ມາລະຍາດໃນການນົບຜູ້ໃຫຍ່ ພໍ່, ແມ່, ອ້າຍ, ເອື້ອຍ ແລະ ຄູອາຈານ, ຍໍມືນົບພຽງເອິກ, ກົ້ມຫົວລົງ ແລະ ການນົບໄຫວ້ພະ ຍໍມືພຽງຫົວ.

### III. ສື່ການຮຽນ-ການສອນ

ບົດຄຳຄ່ອງ ຄອບຄົວຂອງຂ້ອຍ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບຄົນໃນຄອບຄົວ.
2. ໃຫ້ເດັກເລົ່າຄຳຄ່ອງ ຄອບຄົວຂອງຂ້ອຍ ປະກອບທ່າທາງ ແລະ ຄູສົນທະນາກັບເດັກກ່ຽວກັບເນື້ອໃນຂອງ ຄຳຄ່ອງ.
3. ໃຫ້ເດັກບອກມາລະຍາດໃນການນົບ, ການໄຫວ້.
4. ໃຫ້ເດັກຝຶກປະຕິບັດຕົວຈິງການນົບ ແລະ ນົບໄຫວ້ພະ.
5. ໃຫ້ເດັກເວົ້າຄືນກ່ຽວກັບມາລະຍາດໃນການນົບ ແລະ ການໄຫວ້ພະ ແລະ ເລົ່າຄຳຄ່ອງ.
6. ສຶກສາອົບຮົມເດັກກ່ຽວກັບມາລະຍາດ ເວລາພົບຜູ້ໃຫຍ່ຕ້ອງຍໍມືນົບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການເລົ່າຄຳຄ່ອງ ຄອບຄົວຂອງຂ້ອຍ ປະກອບທ່າທາງ.
2. ການບອກມາລະຍາດໃນການນົບຜູ້ໃຫຍ່ ແລະ ການໄຫວ້ພະ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດເສັ້ນຊື່ເບື້ອງ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂີດເສັ້ນຊື່ເບື້ອງຂວາ ແຕ່ລຸ່ມຂຶ້ນເທິງຕາມຮອຍຈ້ຳຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການຂີດເສັ້ນຊື່ເບື້ອງຂວາ ແຕ່ລຸ່ມຂຶ້ນເທິງຕາມຮອຍຈ້ຳ.

## III. ສື່ການຮຽນ-ການສອນ

1. ສໍດຳ.
2. ປຶ້ມບົດເຝິກຫັດພາສາລາວ ເຫຼັ້ມທີ 1 ຫຼື ເຈ້ຍແບບຂີດເສັ້ນຊື່ເບື້ອງຂວາ ແຕ່ລຸ່ມຂຶ້ນເທິງຕາມຮອຍຈ້ຳ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຂີດເສັ້ນດ້ວຍມືເປົ່າຢູ່ກາງຫາວ.
2. ຄູແນະນຳ, ສາທິດວິທີຂີດເສັ້ນຊື່ເບື້ອງຂວາ ແຕ່ລຸ່ມຂຶ້ນເທິງ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນອຸປະກອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຂີດເສັ້ນຊື່ເບື້ອງຂວາ ແຕ່ລຸ່ມຂຶ້ນເທິງຕາມຮອຍຈ້ຳ.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້:  ແບບຫຼິ້ນ ຕາກເຄື່ອງນຸ່ງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ ຕາກເຄື່ອງນຸ່ງ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ຕາກເຄື່ອງນຸ່ງ.

### III. ສື່ການຮຽນ-ການສອນ

1. ເຄື່ອງນຸ່ງ: ໂສ້ງ, ເສື້ອ, ກະໂປ່ງ, ສິ້ນ ແລະ ເຊືອກຟາງ.
2. ໝາກຫວິດ.
3. ວິທີຫຼິ້ນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເບັດແອວໄປເບື້ອງຊ້າຍ, ເບື້ອງຂວາ ແລະ ແກວ່ງແຂນ.
2. ຄູແນະນຳ ແລະ ສາທິດການຫຼິ້ນແບບຫຼິ້ນ ຕາກເຄື່ອງນຸ່ງ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ຕາກເຄື່ອງນຸ່ງ.
5. ສຶກສາອົບຮົມເດັກກ່ຽວກັບ ການຫຼິ້ນແບບຫຼິ້ນ ຕາກເຄື່ອງນຸ່ງ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ  ການຫຼິ້ນແບບຫຼິ້ນປະດິດສ້າງ ຕາກເຄື່ອງນຸ່ງ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບທີ່ຄືກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ນຳເອົາຮູບພາບທີ່ຄືກັນມາຈັບຄູ່ກັນຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຮູບພາບທີ່ຄືກັນ ເດັກນ້ອຍນົບຜູ້ໃຫຍ່

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຮູບພາບທີ່ຄືກັນ ເດັກນ້ອຍນົບຜູ້ໃຫຍ່.
2. ເກມເກົ່າ ເກມຕໍ່ຮູບພາບ ເດັກນ້ອຍນັ່ງພັບແພບ.

### IV. ກິດຈະກຳການຮຽນ-ການສອນ

1. ຄູ ສົນທະນາກັບເດັກກ່ຽວກັບ ການນົບໄຫ້ວ.
2. ຄູ ສະເໜີຊື່ເກມ.
3. ຄູ ສາທິດວິທີຫຼິ້ນເກມ ຈັບຄູ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຈັບຄູ່ຮູບພາບທີ່ຄືກັນ.
2. ການມີສ່ວນຮ່ວມຂອງເດັກແຕ່ລະຄົນ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກໍາການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເກມການສຶກສາຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມບົດບາດສົມມຸດ: ເປັນພໍ່, ແມ່, ລູກ ສະແດງຄວາມເຄົາລົບຕໍ່ກັນ
2. ການຫຼິ້ນໃນມຸມເກມການສຶກສາ ເກມຈັບຄູ່ຮູບພາບທີ່ຄືກັນ ເດັກນ້ອຍນົບຜູ້ໃຫຍ່.

### III. ສື່ການຮຽນ-ການສອນ

1. ໂສ້ງ, ເສື້ອ, ເກີບ, ຜ້າ ແລະ ຕຸກກະຕາ.
2. ເກມຈັບຄູ່ຮູບພາບທີ່ຄືກັນ: ເດັກນ້ອຍນົບຜູ້ໃຫຍ່.
3. ບົດເພງ ຄອບຄົວຂອງຂ້ອຍ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຄອບຄົວຂອງຂ້ອຍ.
2. ຄູແນະນໍາວິທີຫຼິ້ນຕາມມຸມບົດບາດສົມມຸດ, ມຸມເກມການສຶກສາ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນ ເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຫ້ອງນອນຂອງຂ້ອຍ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດຄຳຄ່ອງ ຫ້ອງນອນຂອງຂ້ອຍ.
3. ການບໍລິຫານຫົວເຂົ່າ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກ ບໍລິຫານຫົວເຂົ່າ.
2. ໃຫ້ເດັກຍ່າງເປັນວົງມົນຕາມຫຼັງກັນ.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຫ້ອງນອນຂອງຂ້ອຍ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງນົກບິນຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ການຍ່າງ ແລະ ການເຮັດທ່າທາງຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້:  ມາລະຍາດໃນການໄປ, ມາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ບອກມາລະຍາດໃນການໄປ, ມາ.

### II. ເນື້ອໃນຕົ້ນຕໍ

ມາລະຍາດໃນການໄປ, ມາ ຂໍອະນຸຍາດ ແລະບອກສະຖານທີ່ ທີ່ຕ້ອງການໄປ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ຄອບຄົວຂອງຂ້ອຍ.
2. ເດັກ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ຄອບຄົວຂອງຂ້ອຍ ປະກອບທ່າທາງ.
2. ຄູສົນທະນາກັບເດັກ ກ່ຽວກັບມາລະຍາດໃນການໄປ, ມາ.
3. ໃຫ້ເດັກບອກມາລະຍາດໃນການໄປ, ມາ.
4. ໃຫ້ເດັກຝຶກປະຕິບັດຕົວຈິງການຂໍອະນຸຍາດໃນການໄປ, ມາ.
5. ໃຫ້ເດັກເວົ້າຄືນກ່ຽວກັບມາລະຍາດໃນການໄປ, ມາ.
6. ສຶກສາອົບຮົມເດັກກ່ຽວກັບ ການຄອບລາເມື່ອຕ້ອງການໄປ, ມາ ແລະ ການຍໍມືນົບເພື່ອຂໍອະນຸຍາດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການບອກມາລະຍາດໃນການໄປ, ມາ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດເສັ້ນຊື່

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂີດເສັ້ນຊື່ເບື້ອງຊ້າຍ ແຕ່ລຸ່ມຂຶ້ນເທິງຕາມຮອຍຈ້ຳຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຂີດເສັ້ນຊື່ເບື້ອງຊ້າຍ ແຕ່ລຸ່ມຂຶ້ນເທິງຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ສໍດຳ.
2. ປຶ້ມບົດຝຶກຫັດພາສາລາວ ເຫຼັ້ມ 1 ຫຼື ເຈ້ຍແບບເສັ້ນຊື່ເບື້ອງຊ້າຍແຕ່ລຸ່ມຂຶ້ນເທິງຕາມຮອຍຈ້ຳ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຕົບມື ແລະ ສັ່ນຄໍ່ມື.
2. ຄູແນະນຳ, ສາທິດການຂີດເສັ້ນຊື່ເບື້ອງຊ້າຍ ແຕ່ລຸ່ມຂຶ້ນເທິງ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຂີດເສັ້ນຊື່ເບື້ອງຊ້າຍ ແຕ່ລຸ່ມຂຶ້ນເທິງ.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ເຊື່ອງຜ້າ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ.

### III. ສື່ການຮຽນ-ການສອນ

1. ຜ້າ.
2. ວິທີຫຼິ້ນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກສົນທະນາກ່ຽວກັບຊື່ເຄື່ອງຫຼິ້ນໃນເດີ່ນ.
2. ຄູແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ເຊື່ອງຜ້າ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ເຊື່ອງຜ້າ.
5. ສຶກສາອົບຮົມເດັກກ່ຽວກັບ ການຫຼິ້ນແບບຫຼິ້ນ ເຊື່ອງຜ້າ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້:  ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມ ຕໍ່ຮູບພາບ ເດັກນ້ອຍຄອບລາພໍ່ແມ່ໄປໂຮງຮຽນ

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ: ເດັກນ້ອຍຄອບລາພໍ່ແມ່ໄປໂຮງຮຽນ.
2. ເກມເກົ່າ ເກມຕໍ່ຮູບພາບ: ເດັກນ້ອຍນົບຜູ້ໃຫຍ່.

### IV. ກິດຈະກຳການຮຽນ-ການສອນ

1. ຄູ ສົນທະນາກັບເດັກກ່ຽວກັບ ມາລະຍາດໃນການໄປມາ
2. ຄູ ສະເໜີຊື່ເກມ.
3. ຄູ ສາທິດວິທີການຫຼິ້ນເກມຕໍ່ຮູບພາບ  ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຕໍ່ຮູບພາບຕາມແບບ.
2. ການມີສ່ວນຮ່ວມຂອງເດັກແຕ່ລະຄົນ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມບົດບາດສົມມຸດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.
2. ຫຼິ້ນໃນມ ຸມບົດບາດສົມມຸດຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ຕີກອງ, ສັ່ນໝາກກະແຊັກ, ເປົ່າແຄນ, ຈັບໄມໂຄຼໂຟນ ແລະ ຮ້ອງເພງ.
2. ການຫຼິ້ນໃນມຸມບົດບາດສົມມຸດ ຫຼິ້ນຊັກເຄື່ອງ, ຕາກເຄື່ອງ ແລະ ພັບເຄື່ອງນຸ່ງ.

### III. ສື່ການຮຽນ-ການສອນ

1. ກອງ, ໝາກກະແຊັກ, ແຄນ, ໄມໂຄຼໂຟນ ຫຼື ເຄື່ອງດົນຕີທີ່ມີໃນທ້ອງຖິ່ນ.
2. ເຄື່ອງນຸ່ງ: ໂສ້ງ, ເສື້ອ, ສິ້ນ ແລະ ຜ້າ.
3. ບັດເຂົ້າມຸມຫຼິ້ນ.
4. ບົດຄຳຄ່ອງ ເຮືອນຫຼັງໜຶ່ງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ເຮືອນຫຼັງໜຶ່ງ.
2. ຄູແນະນຳວິທີຫຼິ້ນຕາມມຸມ ເຄື່ອງຫຼິ້ນສຳຜັດ, ມຸມບົດບາດສົມມຸດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນ ເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.

# ເອກະສານອ້າງອີງ

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

1. ປື້ມຄູ່ມືການຈັດກິດຈະກຳການສອນຊັ້ນອະນຸບານ ກະຊວງສຶກສາທິການ, ກົມສາມັນ ເດືອນ ມີນາ (3) ປີ 2005 ພິມທີ່ເອກະພາບການພິມ.
2. ປື້ມຫຼັກການສອນອະນຸບານ ກຸ່ມວິຊາຄູທົ່ວໄປ ສາຍສ້າງຄູອະນຸບານລະບົບ 2 ປີ ປີທີ 1 ປີ 2008.
3. ປື້ມວິທີສອນກາຍະສຶກສາ ກຸ່ມວິທີສອນສາຍສ້າງຄູອະນຸບານລະບົບ 2 ປີ ປີທີ 2 ປີ 2009.
4. ປື້ມແຜນຈັດປະສົບການຊັ້ນອະນຸບານ1 ກະຊວງສຶກສາທິການ, ກົມສາມັນ ເດືອນມີນາ (3) ປີ 2005 ພິມທີ່ເອກະພາບການພິມ.
5. ຄູ່ມືຄູພະລະສຶກສາ, ຫັດຖະກຳ, ສິລະປະກຳ, ສິລະປະດົນຕີຊັ້ນປະຖົມ ປີທີໜຶ່ງ ກະຊວງສຶກສາທິການ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

## ກິດຈະກຳວົງມົນ

6. ຄູມືຄູການຈັດກິດຈະກຳການຮຽນ-ການສອນ ຊັ້ນອະນຸບານກົມສາມັນສຶກສາ ກະຊວງສຶກສາທິການ.
7. ຫຼັກການສອນເດັກກ່ອນໄວຮຽນລະບົບ 11+3 ກະຊວງສຶກສາທິການ ປີ 2008.

## ກິດຈະກຳສິລະປະສ້າງສັນ

8. ຄູ່ມືຄູກິດຈະກຳສ້າງສັນ (ສິລະປະສຶກສາ) ຊັ້ນອະນຸບານ ປີ 1992.
9. ກະຊວງສຶກສາທິການ, ກົມສາມັນສຶກສາຄູ່ມືຄູກິດຈະກຳການສອນ ຊັ້ນອະນຸບານ ປີ 2005.
10. ກະຊວງສຶກສາທິການ, ປື້ມຫຼັກການສອນອະນຸບານ ລະບົບ 11+2 ປີ 2008 (ໜ້າ 93).

## ກິດຈະກຳການຫຼິ້ນກາງແຈ້ງ

11. ຄູ່ມືຄູ ກິດຈະກຳກາງແຈ້ງ ຊັ້ນອະນຸບານ ກະຊວງສຶກສາ ປີ 1990.
12. ຄູ່ມືຄູ ກິດຈະກຳການສອນ ຊັ້ນອະນຸບານ ກະຊວງສຶກສາ ປີ 1990 ໜ້າທີ 102,105,106,131.
13. ປື້ມແບບຮຽນວິຊາຫຼັກການສອນເດັກກ່ອນໄວຮຽນ ລະບົບ 11+2 ກົມສ້າງຄູ, ກະຊວງສຶກສາທິການ ປີ 2004 (ບົດທີ 11 ກິດຈະກຳກາງແຈ້ງ).

## ກິດຈະກຳເກມການສຶກສາ

14. ປື້ມແຜ່ນຈັດປະສົບການ ຊັ້ນອະນຸບານ 1 ເຫຼັ້ມ 1, ປີ 2005 (ກະຊວງສຶກສາທິການ-ກົມສາມັນສຶກສາ).
15. ປື້ມວິຊາ: ຫຼັກການສອນ 11+3 ສົກຮຽນ 2008 (ກະຊວງສຶກສາທິການ-ກົມສ້າງຄູ).

## ກິດຈະກຳການຫຼິ້ນຕາມມຸມ

16. ປື້ມ ວິຊາຊອກຮູ້ສະພາບແວດລ້ອມ 11+3 ປີ 2008 (ກະຊວງສຶກສາທິການ-ກົມສ້າງຄູ).
17. ປື້ມ ແຜນຈັດປະສົບການຊັ້ນອະນຸບານ 1 ເຫຼັ້ມ 1 ປີ 2005 (ກະຊວງສຶກສາທິການ-ກົມສາມັນສຶກສາ).
18. ປື້ມ ການພັດທະນາໂຮງຮຽນຄຸນນະພາບ, ຄູ່ມື ຄູສອນຫ້ອງກຽມປະຖົມ (ກະຊວງສຶກສາ 2010).